ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----------------

ເຈົ້າແຂວງ

ເລກທີ: 844 /ຈຂ.ບກ

ບໍ່ແກ້ວ, ວັນທີ: 04 / 10 /2022.

# ຂໍ້ຕົກລົງ

## ວ່າດ້ວຍການຄຸ້ມຄອງ ແລະ ພັດທະນາຕົວເມືອງຫ້ວຍຊາຍ

## ( ສະບັບປັບປຸງ )

- **ອີງຕາມ** ກົດໝາຍການປົກຄອງທ້ອງຖິ່ນ (ສະບັບປັບປຸງ) ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015. ພາກທີ III ໝວດທີ IV, ມາດຕາ 20 ວ່າດ້ວຍສິດ ແລະ ໜ້າທີ່ຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ.
- **ອີງຕາມ** ກົດໝາຍ ວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍ ວ່າດ້ວຍງົບປະມານແຫ່ງລັດ, ສະບັບເລກທີ 13/ ສພຊ, ນະຄອນຫຼວງວຽງຈັນ, ວັນທີ 17 ພະຈິກ 2021.
- **ອີງຕາມ** ແຜນພັດທະນາເສດຖະກິດ-ສັງຄົມ ແຜນການ 5 ປີ ຄັ້ງທີ IX (2021-2025) ຂອງແຂວງບໍ່ແກ້ວ ແລະ ແຜນການ 5 ຄັ້ງທີ VII ( 2019-2024 ) ຂອງເມືອງຫ້ວຍຊາຍ.
- **ອີງຕາມ** ມະຕິກອງປະຊຸມໄພສາມັນເທື່ອທີ 3 ຂອງສະພາປະຊາຊົນແຂວງບໍ່ແກ້ວ ຊຸດທີ II ສະບັບເລກທີ 03/ ສພຂ. ບກ, ລົງວັນທີ 10 ສິງຫາ 2022.

## ໝວດທີ 1

## ບົດບັນຍັດທົ່ວໄປ

### ມາດຕາ 1 (ປັບປຸງ) ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ, ວິທີການ ແລະ ມາດຕະການ ກ່ຽວກັບ ການຄຸ້ມຄອງ ແລະ ພັດທະນາຕົວເມືອງຫ້ວຍຊາຍ. ກຳນົດການຈັດເກັບລາຍຮັບ ແລະ ການນຳໃຊ້ທຶນ ເຂົ້າໃນການພັດທະນາຕົວເມືອງ ໃຫ້ສອດຄ່ອງກັບ ກົດໝາຍ ແລະ ລະບຽບການ. ສ້າງຕົວເມືອງຫ້ວຍຊາຍ ໃຫ້ເປັນໃຈກາງທາງດ້ານການເມືອງ, ເສດຖະກິດ, ວັດທະນະທຳ-ສັງຄົມ, ເປັນເມືອງທ່ອງທ່ຽວ ແນໃສ່ຮັບປະກັນ ໃຫ້ສັງຄົມມີຄວາມສະຫງົບ, ປອດໄພ ແລະ ເປັນລະບຽບຮຽບຮ້ອຍ ເພື່ອສ້າງເງື່ອນໄຂ ໃຫ້ກາຍເປັນເມືອງພັດທະນາເຂັ້ມແຂງຮອບດ້ານ ຂອງແຂວງບໍ່ແກ້ວ.

### ມາດຕາ 2 (ໃໝ່) ການຄຸ້ມຄອງ ແລະ ພັດທະນາຕົວເມືອງຫ້ວຍຊາຍ

ແມ່ນການຄຸ້ມຄອງ ແລະ ພັດທະນາຕົວເມືອງຫ້ວຍຊາຍ ໃນຂອບເຂດ 18 ບ້ານ ໂດຍປະຕິບັດ ຕາມຄຳຂວັນ 4 ສໍຂອງເມືອງຫ້ວຍຊາຍ. " ຍົກສູງຄວາມສາມາດ ການນຳພາ ແລະ ຄວາມເປັນແບບຢ່າງນຳໜ້າຂອງພັກ ເພີ່ມທະວີ ຄວາມສາມັກຄີ ເປັນປຶກແຜ່ນຂອງປະຊາຊົນບັນດາເຜົ່າ ສຸມທຸກກຳລັງແຮງ ເຂົ້າໃນການປົກປັກຮັກສາ ແລະ

ພັດທະນາເມືອງຫ້ວຍຊາຍ ໃຫ້ມີຄວາມໜັກແໜ້ນ, ເຂັ້ມແຂງ ແລະ ຈະເລີນກ້າວໜ້າ " ສ້າງຕົວເມືອງຫ້ວຍຊາຍ ໃຫ້ກາຍເປັນຕົວເມືອງໜ້າຢູ່ ແລະ ປົກປັກຮັກສາສິ່ງແວດລ້ອມ, ພ້ອມກັນ ຈັດຕັ້ງປະຕິບັດ ຄຳຂັວນ 4 ສ ຂອງ ເມືອງຫ້ວຍຊາຍໃຫ້ປະກົດຜົນເປັນຈິງ.

ການຈັດເກັບລາຍຮັບ ແລະ ການນຳໃຊ້ທຶນ ແມ່ນການຄຸ້ມຄອງລາຍຮັບ-ລາຍຈ່າຍ ດ້ວຍການເກັບຄ່າ ບໍລິການ ແລະ ຄ່າພັນທະຕ່າງໆ ທີ່ເປັນລາຍຮັບ ທີ່ບໍ່ຊໍ້າຊ້ອນກັບພາກສ່ວນອື່ນ, ຈາກສັງຫາລິມາຊັບ, ອະສັງຫາລິ ມາຊັບ ແລະ ຈາກພາກສ່ວນອື່ນ.

**ມາດຕາ 3 (ປັບປຸງ) ອະທິບາຍຄຳສັບ.**

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍດັ່ງນີ້:

1) **ການບໍລິຫານຕົວເມືອງ** ໝາຍເຖິງການຈັດລະບຽບ ແລະ ການບໍລິຫານຕົວເມືອງ ພາຍໃຕ້ກົດໝາຍ, ແນໃສ່ ພັດທະນາຕົວເມືອງ ແບບຢ່າງມີແຜນການ ແລະ ສ້າງຕົວເມືອງໃຫ້ມີຄວາມສີວິໄລ.
2) **ການຄຸ້ມຄອງການປຸກສ້າງ** ໝາຍເຖິງຂະບວນການຈັດຕັ້ງປະຕິບັດ ການຄົ້ນຄວ້າພິຈາລະນາ ກ່ຽວກັບ ການ ອອກໃບອະນຸຍາດ, ຄວບຄຸມ ແລະ ຕິດຕາມ, ກວດກາ ການປຸກສ້າງ ໃຫ້ຖືກຕ້ອງຕາມການອະນຸຍາດ.
3) **ການປຸກສ້າງ** ໝາຍເຖິງ ການກໍ່ສ້າງ, ຕິດຕັ້ງ, ສ້ອມແປງ, ທັບມ້າງ, ຕໍ່ເຕີມ, ປ່ຽນແປງເປົ້າໝາຍການນຳໃຊ້, ການບູລະນະ ແລະ ປະຕິສັງຂອນສິ່ງປຸກສ້າງ.
4) **ການຕິດຕັ້ງ** ໝາຍເຖິງ ການປະກອບໂຄງສ້າງ ແລະ ສິ້ນສ່ວນເສົາໄຟຟ້າ, ເສົາໂທລະຄົມມະນາຄົມ, ປ້າຍໂຄສະນາ ລະບົບທໍ່ນໍ້າປະປາ ແລະ ອື່ນໆ.
5) **ການຕໍ່ເຕີມ** ໝາຍເຖິງ ການຂະຫຍາຍເນື້ອທີ່ ແລະ ບໍລິມາດຂອງສິ່ງກໍ່ສ້າງທີ່ມີແລ້ວ.
6) **ການອະນຸຍາດປຸກສ້າງ** ໝາຍເຖິງ ການພິຈາລະນາຕາມກົດໝາຍ, ລະບຽບການ ຖ້າເຫັນວ່າເອກະສານ ຂໍອະນຸຍາດປຸກສ້າງຖືກຕ້ອງຕາມເງື່ອນໄຂແລ້ວ ຂະແໜງການດັ່ງກ່າວ ກໍ່ອອກໃບອະນຸຍາດປຸກສ້າງ ຕາມ ລັກສະນະການກໍ່ສ້າງທີ່ໄດ້ສະເໜີ ພາຍໃນກຳນົດເວລາ ທີ່ໄດ້ກຳນົດໄວ້.
7) **ເຂດສະຫງວນ** ໝາຍເຖິງ ຂອບເຂດພື້ນທີ່ ທີ່ສະຫງວນໄວ້ ເພື່ອຂະຫຍາຍກິດຈະການໃດໜຶ່ງ.
8) **ເຂດຂຽວ** ໝາຍເຖິງ ພື້ນທີ່ ທີ່ຜັງເມືອງໄດ້ກຳນົດຢູ່ໃນແຜນຜັງຈັດສັນຕົວເມືອງ ເພື່ອຮັກສາສະພາບແວດລ້ອມ ເຊັ່ນ: ສວນສາທາລະນະ, ຂອບເຂດສະຫງວນແຄມແມ່ນໍ້າຂອງ, ແຄມຫ້ວຍ.
9) **ສິ່ງແວດລ້ອມ** ໝາຍເຖິງ ສິ່ງທີ່ມີຊີວິດ ແລະ ບໍ່ມີຊີວິດ ຊຶ່ງເກີດຂຶ້ນຕາມທຳມະຊາດ ຫຼື ມະນຸດສ້າງຂຶ້ນ ທີ່ຢູ່ ອ້ອມເປົ້າໝາຍໃດໜຶ່ງເຊັ່ນ: ຄົນ, ສັດ, ພືດ ແລະ ອື່ນໆ ທີ່ມີສາຍກ່ຽວພັນ, ສິ່ງຜົນສະທ້ອນຊຶ່ງກັນ ແລະ ກັນ ທາງບວກ ແລະ ທາງລົບ ຕໍ່ການດຳລົງຊີວິດ, ການຄົງຕົວ, ການຂະຫຍາຍຕົວຂອງມະນຸດ ແລະ ທຳມະຊາດ.
10) **ການປົກປັກຮັກສາສິ່ງແວດລ້ອມ** ໝາຍເຖິງ ທຸກການເຄື່ອນໄຫວທີ່ປະກອບສ່ວນເຂົ້າໃນການຮັກສາ ສິ່ງແວດລ້ອມມີຄວາມຍືນຍົງບໍ່ໃຫ້ຖືກທຳລາຍ, ເຮັດໃຫ້ສິ່ງແວດລ້ອມປອດໄສ, ປາສະຈາກມົນລະພິດ, ບໍ່ສົ່ງ ຜົນສະທ້ອນອັນບໍ່ດີຕໍ່ສຸຂະພາບຂອງຄົນ, ສັດ, ພືດ ແລະ ສ້າງຄວາມດຸ່ນດ່ຽງຂອງລະບົບນິເວດວິທະຍາ.
11) **ສາທາລະນຸປະໂພກ** ໝາຍເຖິງການບໍລິການສາທາລະນະ ທີ່ເອື້ອອຳນວຍຄວາມສະດວກໃຫ້ແກ່ປະຊາຊົນ ທີ່ຈຳ ເປັນ ຕໍ່ການດຳເນີນຊີວິດ ເຊັ່ນ: ໄຟຟ້າ, ນໍ້າປະປາ, ໂທລະສັບ, ການເດີນທາງດ້ວຍລົດປະຈຳທາງ ແລະ ອື່ນໆ.
12) **ສາທາລະນຸປະການ** ໝາຍເຖິງ ການກໍ່ສ້າງ ແລະ ບູລະນະປະຕິສັງຂອນ.

13) BE (Bio Extract) ໝາຍເຖິງ ນ້ຳສະກັດຊີວະພາບໃຊ້ດັບກິ່ນ.

14) **ການບໍລິການເກັບມ້ຽນຂີ້ເຫຍື້ອ** ໝາຍເຖິງການຮັບໃຊ້ເກັບມ້ຽນຂີ້ເຫຍື້ອຄົວເຮືອນ, ສຳນັກງານ, ສັງຄົມ ເພື່ອນຳໄປກຳຈັດຢູ່ສະໜາມຂີ້ເຫຍື້ອ ເຮັດໃຫ້ຕົວເມືອງມີຄວາມສະອາດ.

15) **ພັນທະ** ໝາຍເຖິງການປະກອບສ່ວນຊຸກຍູ້ຂອງສັງຄົມ ຕໍ່ວຽກງານດ້ວຍວັດຖຸ, ອຸປະກອນ, ເງິນຄຳ ແລະ ເຫື່ອແຮງ.

16) **ຄຳຂວັນ 4 ສໍຂອງເມືອງຫ້ວຍຊາຍມີຄື:** 1 ສໍ ສະອາດ, 2 ສໍ ສີຂຽວ, 3 ສໍ ສະຫວ່າງ, 4 ສໍ ສະຫງົບ.

**ມາດຕາ 4 ນະໂຍບາຍ ຂອງລັດ ກ່ຽວກັບ ການຄຸ້ມຄອງຕົວເມືອງຫ້ວຍຊາຍ.**

ລັດຊຸກຍູ້ສົ່ງເສີມ ວຽກງານຄຸ້ມຄອງຕົວເມືອງຫ້ວຍຊາຍ ດ້ວຍການວາງນະໂຍບາຍ, ກົດໝາຍ, ລະບຽບການ, ປະຕິບັດມາດຕະການຕ່າງໆ ຂອງກົດໝາຍ ໂດຍເອື້ອອຳນວຍຄວາມສະດວກໃຫ້ຄອບຄົວ, ການຈັດຕັ້ງ ນັບທັງຜູ້ປະກອບການພາຍໃນ ແລະ ຕ່າງປະເທດ ໄດ້ຮັບຄວາມສະດວກ, ວ່ອງໄວ ແລະ ມີສ່ວນຮ່ວມເຂົ້າ ໃນວຽກງານຄຸ້ມຄອງຕົວເມືອງຫ້ວຍຊາຍ ເພື່ອປະກອບສ່ວນເຂົ້າ ໃນການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ ຂອງແຂວງ, ຂອງເມືອງ ໃຫ້ມີຜົນສຳເລັດ ແລະ ມີຄວາມຍືນຍົງ.

**ມາດຕາ 5 (ປັບປຸງ) ຫຼັກການ ກ່ຽວກັບການຄຸ້ມຄອງຕົວເມືອງຫ້ວຍຊາຍ.**

ການເຄື່ອນໄຫວວຽກງານຄຸ້ມຄອງຕົວເມືອງຫ້ວຍຊາຍ ໃຫ້ປະຕິບັດຕາມຫຼັກການດັ່ງຕໍ່ໄປນີ້:

1) ຮັບປະກັນຄວາມສອດຄ່ອງກັບແນວທາງ, ນະ ໂຍບາຍ, ຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ, ຂອງເມືອງ, ຖືກຕ້ອງຕາມ ກົດໝາຍ ແລະ ລະບຽບການ.
2) ຮັບປະກັນ ການຄຸ້ມຄອງ ຢ່າງລວມສູນ ແລະ ເປັນເອກະພາບພາຍໃນຂອບເຂດຕົວເມືອງຫ້ວຍຊາຍ;
3) ສົມທົບຢ່າງກົມກຽວຜົນປະໂຫຍດຂອງລັດ, ລວມໝູ່, ຄອບຄົວ, ຜູ້ປະກອບການທັງພາຍໃນ ແລະ ຕ່າງປະເທດ;
4) ບຸກຄົນ, ນິຕິບຸກຄົນ ແລະ ທຸກການຈັດຕັ້ງ ຢູ່ໃນຕົວເມືອງຫ້ວຍຊາຍ ຕ້ອງມີພັນທະ ປະກອບສ່ວນເຂົ້າໃນການຄຸ້ມຄອງ, ປົກປັກຮັກສາສິ່ງແວດລ້ອມ ແລະ ການພັດທະນາຕົວເມືອງຫ້ວຍຊາຍ.

**ມາດຕາ 6 (ປັບປຸງ) ຂອບເຂດການນຳໃຊ້ຂໍ້ຕົກລົງ**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ, ທຸກການຈັດຕັ້ງ ທີ່ດຳລົງຊີວິດ ແລະ ເຄື່ອນໄຫວ ຢູ່ພາຍໃນ 18 ບ້ານ ໃນຕົວເມືອງຫ້ວຍຊາຍ.

## ໝວດທີ 2
## ທີ່ຕັ້ງ, ຂອບເຂດ ແລະ ອົງປະກອບ

**ມາດຕາ 7 (ປັບປຸງ) ທີ່ຕັ້ງ**

ຕົວເມືອງຫ້ວຍຊາຍ ຕັ້ງຢູ່ໃຈກາງເທດສະບານແຂວງ, ປະກອບມີ 18 ບ້ານ ຄື: ບ້ານຫ້ວຍຕາບ, ບ້ານຫ້ວຍມ່ອນ, ບ້ານໜອງຊາຍ, ບ້ານຂອນແກ້ວ, ບ້ານໃຫຍ່ຫ້ວຍຊາຍເໜືອ, ບ້ານໃຫຍ່ຫ້ວຍຊາຍໃຕ້, ບ້ານຕົ້ນຫາດ, ບ້ານປ່າອ້ອຍ, ບ້ານສີບຸນເຮືອງ, ບ້ານປາກຮາວເໜືອ, ບ້ານປາກຮາວໃຕ້, ບ້ານພີບຸນທອງ, ບ້ານອຸດົມ, ບ້ານມີກກະຈອກ, ບ້ານນ້ຳທີ່ໃຕ້, ບ້ານນ້ຳຄຳ, ບ້ານວຽງໃໝ່ ແລະ ບ້ານດອນ.

**ມາດຕາ 8 (ປັບປຸງ) ຂອບເຂດ**

ຂອບເຂດຕົວເມືອງຫ້ວຍຊາຍ ແມ່ນເລີ່ມຈາກບ້ານຫ້ວຍຕາບ ລຽບຕາມເສັ້ນທາງແຄມຂອງ ໄປຮອດບ້ານດອນ (ຂົວມິດຕະພາບແຫ່ງທີ 4) ແລະ ແຕ່ບ້ານນ້ຳທໍ່ໃຕ້ ໄປຕາມທາງຫຼວງແຫ່ງຊາດ R3 ແລະ ທາງເວັ້ນຕົວເມືອງ ເຊິ່ງກວມເອົາ 18 ບ້ານ ທີ່ໄດ້ລະບຸໄວ້ໃນມາດຕາ 7 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 9 (ປັບປຸງ) ອົງປະກອບ**

ອົງປະກອບຫຼັກ ຂອງຕົວເມືອງຫ້ວຍຊາຍ ແມ່ນປະກອບດ້ວຍບັນດາບ້ານ, ຊັບພະຍາກອນທຳມະຊາດທີ່ມີຊີວິດ, ບໍ່ມີຊີວິດ ແລະ ສິ່ງກໍ່ສ້າງສາທາລະນຸປະໂຫຍດທັງໝົດ ທີ່ນອນຢູ່ໃນຂອບເຂດຕົວເມືອງຫ້ວຍຊາຍ.

**ມາດຕາ 10 (ປັບປຸງ) ການປົກປັກຮັກສາຕົວເມືອງ**

ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງພາກລັດ ແລະ ພາກເອກະຊົນ ຕ້ອງໄດ້ປະກອບສ່ວນ ເຂົ້າໃນການປົກປັກຮັກສາພື້ນຖານໂຄງລ່າງ ແລະ ສາທາລະນຸປະໂພກ, ສາທາລະນຸປະການ, ສິ່ງປຸກສ້າງທີ່ເປັນມູນເຊື້ອວັດທະນະທຳ, ຮີດຄອງປະເພນີອັນດີງາມຂອງຊາດ, ຂອງບັນດາເຜົ່າໄວ້ໃຫ້ໝັ້ນຄົງ.

## ໝວດທີ 3
## ການຄຸ້ມຄອງ, ການຈັດສັນ ແລະ ການພັດທະນາຕົວເມືອງ

**ມາດຕາ 11 (ໃໝ່) ການຄຸ້ມຄອງ.**

ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງທັງພາກລັດ ແລະ ພາກເອກະຊົນ ຕ້ອງໄດ້ເອົາໃຈໃສ່ຄຸ້ມຄອງຕົວເມືອງໃຫ້ມີຄວາມສະອາດ, ສວຍງາມ, ປະດັບປະດາໜ້າເຮືອນ ແລະ ສຳນັກງານ-ອົງການຂອງຕົນ ດ້ວຍການປຸກຫຍ້າ ປຸກດອກໄມ້, ປຸກຕົ້ນໄມ້ປະດັບ ໃຫ້ມີຫຼາຍສີສັນ ໃຫ້ມີຄວາມສະອາດ, ສວຍງາມ, ການຜະລິດເຄື່ອງອຸປະໂພກ ແລະ ບໍລິໂພກຕ່າງໆ ຕ້ອງຮັບປະກັນ ບໍ່ໃຫ້ລົບກວນຄົນອື່ນ, ບໍ່ໃຊ້ທາງຍ່າງ ເປັນບ່ອນວາງເຄື່ອງຂາຍ, ວາງຖົງບັນຈຸ ຫຼື ຖົງບັນຈຸຂີ້ເຫຍື້ອຕ່າງໆ ຮັບປະກັນໃຫ້ມີຄວາມເປັນລະບຽບ, ຖືກກັບລະບຽບທີ່ໄດ້ກຳນົດໄວ້. ການຈອດລົດຕາມແຄມທາງ ຕ້ອງຈອດຕາມຈຸດທີ່ກຳນົດໄວ້, ການຕໍ່ເຕີມເຮືອນ, ຫ້າງ, ຮ້ານ, ການຕິດຕັ້ງປ້າຍໂຄສະນາ ຕ້ອງປະຕິບັດ ຕາມລະບຽບ, ກົດໝາຍ, ການຂົນສິ່ງດິນ, ຫີນ, ແຮ່-ຊາຍ ເຂົ້າໃນຕົວເມືອງ ຕ້ອງມີຜ້າປົກປິດ, ບໍ່ໃສ່ລົ້ນກະບະລົດ, ບໍ່ໃຫ້ຕົກເຮ່ຍຕາມເສັ້ນທາງ, ການຂົນສິ່ງຮັບໃຊ້ອຸປະໂພກ ແລະ ບໍລິໂພກຕ່າງໆ ເຂົ້າໃນຕົວເມືອງ ຕ້ອງຮັບປະກັນຄວາມປອດໄພ ບໍ່ໃຫ້ຕ່າງເກີນນ້ຳໜັກ ທີ່ໄດ້ກຳນົດໄວ້, ດິນເປົ່າຫວ່າງຢູ່ແຄມທາງ ຕ້ອງໄດ້ຕັດຫຍ້າ, ອະນາໄມຮ່ອງນ້ຳ, ຮູນ້ຳຂ້າງທາງໃຫ້ສະອາດ, ການຈັດງານຕ່າງໆ ຕ້ອງປະຕິບັດ ຕາມລະບຽບ ແລະ ກົດໝາຍ ວາງອອກຢ່າງເຂັ້ມງວດ. ອົງການພັດທະນາ ແລະ ບໍລິຫານຕົວເມືອງ ເປັນໃຈກາງ ໃນການປະສານສົມທົບ ກັບ ພາກສ່ວນທີ່ກ່ຽວຂ້ອງ ໃນການຄຸ້ມຄອງ ແລະ ການແກ້ໄຂບັນຫາຄວາມບໍ່ເປັນລະບຽບຮຽບຮ້ອຍໃນຕົວເມືອງ.

**ມາດຕາ 12 (ໃໝ່) ການຈັດສັນ.**

ອົງການພັດທະນາ ແລະ ບໍລິຫານຕົວເມືອງ ມີໜ້າທີ່ຈັດສັນ ຄວາມເປັນລະບຽບຮຽບຮ້ອຍໃນຕົວເມືອງ, ຂື້ນແຜນງົບປະມານກໍ່ສ້າງ, ສ້ອມແປງບຳລຸງຮັກສາ ແລະ ຄຸ້ມຄອງ ບັນດາພື້ນຖານໂຄງລ່າງ ໃຫ້ສາມາດນຳໃຊ້ໄດ້ຍືນຍົງ, ຈັດສັນສະຖານທີ່ສາທາລະນະ, ລະບົບຮ່ອງລະບາຍນ້ຳທຳມະຊາດ, ຮ່ອງລະບາຍນ້ຳແຄມທາງ, ຮ່ອງລະບາຍນ້ຳເປື້ອນ, ສວນດອກໄມ້ສາທາລະນະ, ດອກໄມ້ຢູ່ວົງວຽນ ແລະ ທາງດອນກາງທາງ, ລວມທັງ ຕິດຕາມກວດກາ ແລະ ຄຸ້ມຄອງຄວາມສະອາດ, ຄວາມສວຍງາມ, ຄວາມເປັນລະບຽບຮຽບຮ້ອຍ, ການປະດັບປະດາຕົວ

ເມືອງ ແລະ ອື່ນໆ ຕາມທີ່ໄດ້ກຳນົດໄວ້.

**ມາດຕາ 13 (ໃໝ່) ການພັດທະນາ**

ການພັດທະນາຕົວເມືອງຫ້ວຍຊາຍ ເປັນໜ້າທີ່ຂອງໝົດທຸກຄົນ ໂດຍເລີ່ມຈາກຄອບຄົວ, ບ້ານ, ອົງການຈັດຕັ້ງຕ່າງໆ, ທຸກພາກສ່ວນ ຕ້ອງມີສ່ວນຮ່ວມ ແລະ ໃຫ້ເປັນຄວາມຮັບຜິດຊອບຂອງທົ່ວປວງຊົນ ເປັນຕົ້ນ: ການກໍ່ສ້າງ, ການສ້ອມແປງພື້ນຖານໂຄງລ່າງ, ການຕົບແຕ່ງປະດັບປະດາ, ການໂຄສະນາຕ່າງໆ, ການຜະລິດກະສິກຳ, ຫັດຖະກຳ, ອຸດສາຫະກຳ, ການຄ້າຂາຍເຮັດທຸລະກິດ ແລະ ກິດຈະກຳທີ່ສິ່ງອອກ ຕ້ອງເອົາໃຈໃສ່ໃນການປົກປັກຮັກສາຕົວເມືອງ ໃຫ້ມີຄວາມສະອາດ, ສວຍງາມ ເຮັດໃຫ້ຕົວເມືອງ ເປັນຕາໜ້າຢູ່, ໜ້າທ່ຽວຊົມ ເພື່ອດຶງດູດເອົານັກທ່ອງທ່ຽວ ທັງພາຍໃນ ແລະ ຕ່າງປະເທດ ເຂົ້າມາທ່ຽວຫຼາຍຂຶ້ນ.

**ມາດຕາ 14 (ປັບປຸງ) ການອະນຸຍາດການປຸກສ້າງ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງພາກລັດ ແລະ ເອກະຊົນ ທີ່ຕ້ອງການປຸກສ້າງອາຄານ, ຮ້ານອາຫານ, ເຮືອນພັກ, ໂຮງແຮມໃນຕົວເມືອງຫ້ວຍຊາຍ ຕ້ອງໄດ້ປະກອບເອກະສານ ເພື່ອຂໍອະນຸຍາດປຸກສ້າງໃຫ້ຖືກຕ້ອງຕາມຂັ້ນຕອນ, ລະບຽບການ ແລະ ກົດໝາຍ.

**ມາດຕາ 15 (ປັບປຸງ) ຜູ້ທີ່ໄດ້ຮັບອະນຸຍາດ ປຸກສ້າງມີໜ້າທີ່ ແລະ ຄວາມຮັບຜິດຊອບ**

1. ໃນເວລາລົງມືປຸກສ້າງ ຕ້ອງສົມທົບກັບ ພາກສ່ວນອະນຸຍາດການປຸກສ້າງ ແລະ ຜູ້ຮັບເໝົາ, ຕ້ອງປະຕິບັດຢ່າງເຂັ້ມງວດ ຕໍ່ມາດຕະການໃນການຮັກສາຄວາມປອດໄພ, ຄວາມເປັນລະບຽບຮຽບຮ້ອຍ ພ້ອມທັງຮັກສາສິ່ງແວດລ້ອມ ເພື່ອຫຼີກເວັ້ນການສ້າງຜົນກະທົບອັນບໍ່ດີ ຕໍ່ຜູ້ຢູ່ອາໄສ ໃນບໍລິເວນໃກ້ຄຽງ ຫຼື ຕໍ່ສາທາລະນະ.

2. ຕ້ອງໃຫ້ການຮ່ວມມື, ສະແດງໃບອະນຸຍາດ, ເອກະສານປຸກສ້າງຄົບຊຸດ ແລະ ປະຕິບັດ ຕາມການແນະນຳຂອງພະນັກງານວິຊາການຈາກພາກສ່ວນທີ່ກ່ຽວຂ້ອງ ຫຼື ຈາກຄະນະຄຸ້ມຄອງຕົວເມືອງ ລົງກວດກາຢ່າງເຂັ້ມງວດ.

3. ເວລາລົງຕິດຕາມ, ກວດກາວຽກ ກໍລະນີພົບເຫັນ ເຈົ້າໜ້າທີ່ ປະຕິບັດໜ້າທີ່ບໍ່ຖືກຕ້ອງ, ສວຍໃຊ້ອຳນາດ, ໜ້າທີ່ຕຳແໜ່ງ ເພື່ອຜົນປະໂຫຍດສ່ວນຕົວ ຫຼື ໃຊ້ສິດເກີນຂອບເຂດ ຕ້ອງແຈ້ງຕໍ່ຄະນະຮັບຜິດຊອບຄຸ້ມຄອງຕົວເມືອງ ຮັບຊາບ ເພື່ອແກ້ໄຂໃຫ້ທັນການ.

4. ພາຍຫຼັງທີ່ປຸກສ້າງສຳເລັດແລ້ວ ຕ້ອງແຈ້ງໃຫ້ພາກສ່ວນອະນຸຍາດ ການປຸກສ້າງ ຮັບຊາບ ເພື່ອລົງກວດກາ ແລະ ອອກເອກະສານຢັ້ງຢືນຄວາມຖືກຕ້ອງທາງດ້ານເຕັກນິກ ແລະ ຄຸນນະພາບ.

**ມາດຕາ 16 (ປັບປຸງ) ການຕິດຕັ້ງປ້າຍໂຄສະນາ**

ບຸກຄົນ, ນິຕິບຸກຄົນ, ຫົວໜ່ວຍທຸລະກິດ ແລະ ອົງການຈັດຕັ້ງຕ່າງໆ ມີຈຸດປະສົງ ກໍ່ສ້າງປ້າຍໂຄສະນາ ຫຼື ຕິດຕັ້ງປ້າຍໂຄສະນາ ຢູ່ໃນຕົວເມືອງ ຫ້ວຍຊາຍ ຕ້ອງໄດ້ຮັບອະນຸຍາດ ການອອກໃບອະນຸຍາດຈາກອົງການພັດທະນາ ແລະ ບໍລິຫານຕົວເມືອງ. ທຸກເອກະສານສະເໜີຂໍອະນຸຍາດ ຕ້ອງໄດ້ຮັບການຢັ້ງຢືນຄວາມຖືກຕ້ອງຈາກພາກສ່ວນທີ່ກ່ຽວຂ້ອງ ຄື: ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ, ພະແນກໂຍທາທິການ ແລະ ຂົນສົ່ງແຂວງ, ຫ້ອງການໂຍທາທິການ ແລະ ຂົນສົ່ງເມືອງ, ຫ້ອງການຖະແຫຼງຂ່າວວັດທະນະທຳ ແລະ ທ່ອງທ່ຽວເມືອງ ຕາມການແບ່ງຂັ້ນຄຸ້ມຄອງ ລະຫວ່າງ ແຂວງ ແລະ ເມືອງຈຶ່ງດຳເນີນການກໍ່ສ້າງ ຫຼື ຕິດຕັ້ງປ້າຍໂຄສະນາ ແລະ ຈ່າຍຄ່າທຳນຽມ ຕາມລະບຽບການທີ່ໄດ້ກຳນົດໄວ້.

**ມາດຕາ 17 ຄວາມຮັບຜິດຊອບ ຂອງຜູ້ຮັບເໝົາກໍ່ສ້າງ**

ຈັດວາງພາຫະນະ, ເຄື່ອງມືອຸປະກອນ ແລະ ວັດສະດຸຕ່າງໆ ທີ່ນຳໃຊ້ໃນການປຸກສ້າງ-ກໍ່ສ້າງ ຫຼື ສ້ອມແປງ ໂດຍບໍ່ໃຫ້ກີດຂວາງການສັນຈອນ ແລະ ສ້າງຄວາມເປິະເປື້ອນ ຫຼື ເຮັດໃຫ້ມີຜົນກະທົບຕໍ່ຜູ້ອື່ນ,

ຕ້ອງມີຮົ້ວກັ້ນບໍລິເວນກໍ່ສ້າງ ເພື່ອປ້ອງກັນອັນຕະລາຍ ທີ່ອາດຈະເກີດຂຶ້ນໃນເວລາດໍາເນີນການກໍ່ສ້າງ ຫຼື ສ້ອມແປງ, ປະຕິບັດຢ່າງເຂັ້ມງວດ ຕໍ່ຄວາມປອດໄພ, ຄວາມເປັນລະບຽບຮຽບຮ້ອຍ ທາງດ້ານສັງຄົມ-ສິ່ງແວດລ້ອມ, ການປຸກສ້າງຕ້ອງໄດ້ປະຕິບັດ ໃຫ້ຖືກຕ້ອງຕາມແບບທີ່ໄດ້ຮັບອະນຸຍາດ ແລະ ຮັບປະກັນດ້ານມາດຕະຖານເຕັກນິກ.

**ມາດຕາ 18 (ປັບປຸງ) ການຄຸ້ມຄອງການຈີກດິນ, ການຖົມດິນ ແລະ ການຂົນຍ້າຍດິນ**

ທຸກພາກສ່ວນການຈັດຕັ້ງພາກລັດ, ເອກະຊົນ ແລະ ນິຕິບຸກຄົນ ທີ່ມີຈຸດປະສົງຈີກດິນ, ຖົມດິນ ແລະ ຂົນຍ້າຍດິນ ຕ້ອງໄດ້ຮັບອະນຸຍາດຈາກພາກສ່ວນທີ່ກ່ຽວຂ້ອງຂອງແຂວງ ຄື: ພະແນກໂຍທາທິການ ແລະ ຂົນສົ່ງແຂວງ ໂດຍຜ່ານການເຫັນດີຈາກພະແນກຊັບພະຍາກອນ, ທໍາມະຊາດ ແລະ ສິ່ງແວດລ້ອມແຂວງ, ພະແນກການເງິນແຂວງ, ພະແນກຈາລະຈອນ ຈາກກອງບັນຊາການ ປສກ ແຂວງ ແລະ ອົງການພັດທະນາ ແລະ ບໍລິຫານຕົວເມືອງແຂວງ ຈຶ່ງສາມາດດໍາເນີນ, ການຈີກດິນ, ການຖົມດິນ ແລະ ຂົນຍ້າຍດິນໄດ້ ແລະ ຕ້ອງໄດ້ກໍານົດສະຖານທີ່ຢ່າງຄັກແນ່, ພາກສ່ວນທີ່ກ່ຽວຂ້ອງຕ້ອງໄດ້ລົງຕິດຕາມ, ກວດກາ ໃນເວລາຈັດຕັ້ງປະຕິບັດ ການຈີກດິນ, ການຖົມດິນ ແລະ ການຂົນຍ້າຍດິນ ຮັບປະກັນບໍ່ໃຫ້ດິນຕົກເຮ່ຍສ້າງຄວາມບໍ່ສະອາດ ແລະ ຄວາມເສຍຫາຍ ຕາມເສັ້ນທາງ ແລະ ເສຍຄ່າພັນທະ ຕາມລະບຽບ, ກົດໝາຍທີ່ໄດ້ກໍານົດໄວ້.

## ໝວດທີ 4
## ການຄຸ້ມຄອງສິ່ງແວດລ້ອມ

**ມາດຕາ 19 (ປັບປຸງ) ການບໍລິການເກັບມ້ຽນຂີ້ເຫຍື້ອ**

ສໍານັກງານອົງການ, ບຸກຄົນ, ນິຕິບຸກຄົນ ຫົວໜ່ວຍທຸລະກິດຕ່າງໆ, ບ້ານ, ຄົວເຮືອນ, ຜູ້ໃຊ້ບໍລິການຂີ້ເຫຍື້ອຕ້ອງມີອຸປະກອນເກັບມ້ຽນຂີ້ເຫຍື້ອເປັນຕົ້ນ: ມີພາສະນະເກັບມ້ຽນຂີ້ເຫຍື້ອ ( ຖັງ, ກະຕ່າ,ຖົງຢາງ ) ໂດຍໃຫ້ແຍກປະເພດຂີ້ເຫຍື້ອອອກເປັນ 3 ປະເພດ ຄືດັ່ງນີ້:

1. **ຂີ້ເຫຍື້ອປຽກ:** ປະເພດເສດອາຫານ, ເສດຜັກ, ເປືອກໝາກໄມ້ ແລະ ອື່ນໆ.
2. **ຂີ້ເຫຍື້ອແຫ້ງ:** ແກ້ວເຈ້ຍ, ຖົງຢາງ, ກະຕຸກຢາງ, ປະເພດຂວດແກ້ວ, ເສດເຫຼັກອື່ນໆ.
3. **ຂີ້ເຫຍື້ອທີ່ເປັນພິດ:** ຖ່ານໄຟສາຍເກົ່າ, ຫຼອດໄຟ, ກ່ອງຢາຂ້າຫຍ້າ, ຂ້າແມງໄມ້ ແລະ ພາສະນະບັນຈຸສານເຄມີ ແລະ ອື່ນໆ ເພື່ອສະດວກໃນການເກັບມ້ຽນ ແລະ ການຂົນສົ່ງ.

**ມາດຕາ 20 (ປັບປຸງ) ສະຖານທີ່ເກັບມ້ຽນຂີ້ເຫຍື້ອ**

ສໍານັກງານອົງການ, ບຸກຄົນ, ນິຕິບຸກຄົນ ຫົວໜ່ວຍທຸລະກິດຕ່າງໆ, ບ້ານ, ຄົວເຮືອນ ຕ້ອງມີສະຖານທີ່ເກັບມ້ຽນຂີ້ເຫຍື້ອ ໃຫ້ເປັນລະບຽບຮຽບຮ້ອຍ, ບໍ່ໃຫ້ເອົາເສັ້ນທາງ, ປ່າທາງ ແລະ ທາງຄົນຍ່າງ ເປັນບ່ອນເກັບມ້ຽນຂີ້ເຫຍື້ອ ທີ່ເປັນການສ້າງຄວາມເປິເປື້ອນ, ຄວາມບໍ່ເປັນລະບຽບຮຽບຮ້ອຍ ແລະ ສ້າງສິ່ງກີດຂວາງໃຫ້ແກ່ການສັນຈອນໄປ-ມາ.

**ມາດຕາ 21 (ປັບປຸງ) ການບໍລິການເກັບມ້ຽນຂີ້ເຫຍື້ອ**

ສໍານັກງານອົງການ, ບຸກຄົນ, ນິຕິບຸກຄົນ ຫົວໜ່ວຍທຸລະກິດຕ່າງໆ, ບ້ານ, ຄົວເຮືອນ ຕ້ອງຫັນມາໃຊ້ບໍລິການເກັບມ້ຽນຂີ້ເຫຍື້ອ ນໍາອົງການພັດທະນາ ແລະ ບໍລິຫານຕົວເມືອງ ຫຼື ໜ່ວຍງານທີ່ໄດ້ຮັບອະນຸຍາດຈາກອົງການພັດທະນາ ແລະ ບໍລິຫານຕົວເມືອງ.

**ມາດຕາ 22 (ປັບປຸງ) ການຂົນສົ່ງຂີ້ເຫຍື້ອໄປຖິ້ມຢູ່ສະໜາມຂີ້ເຫຍື້ອ**

ສໍານັກງານອົງການ, ບຸກຄົນ, ນິຕິບຸກຄົນ ຫົວໜ່ວຍທຸລະກິດຕ່າງໆ, ບ້ານ, ຄົວເຮືອນ ທີ່ເອົາຂີ້ເຫຍື້ອ

ໄປຖິ້ມດ້ວຍຕົນເອງ ຕ້ອງມີຜ້າປົກຫຸ້ມກະບະລົດ ເພື່ອບໍ່ໃຫ້ຂີ້ເຫຍື້ອຕົກເຮ່ຍໃສ່ເສັ້ນທາງ ຫຼື ໄປຖິ້ມໃສ່ຕາມແຄມທາງ ແລະ ຫ້ວຍຮ່ອງ ຢ່າງເດັດຂາດ ແລະ ຕ້ອງໄດ້ເສຍຄ່າທຳນຽມຕາມລະບຽບການທີ່ກຳນົດໄວ້.

**ມາດຕາ 23 (ປັບປຸງ) ການຖິ້ມຂີ້ເຫຍື້ອ ຕາມສະຖານທີ່ຕ່າງໆພາຍໃນຕົວເມືອງ**

ສຳນັກງານອົງການ, ບຸກຄົນ, ນິຕິບຸກຄົນ ຫຼືໜ່ວຍທຸລະກິດຕ່າງໆ, ບ້ານ, ຄົວເຮືອນ ບໍ່ໃຫ້ຖິ້ມຂີ້ເຫຍື້ອທຸກປະເພດໃສ່ເສັ້ນທາງ, ປ່າທາງ, ແຄມທາງ, ດິນເປົ່າຫວ່າງ, ສະຖານທີ່ສາທາລະນະ, ສະຖານທີ່ບໍລິການຄ້າຂາຍ, ສະຖານທີ່ການຈັດຕັ້ງຕ່າງໆ, ຮ່ອງລະບາຍນໍ້າ, ນໍ້າຫ້ວຍ, ແມ່ນໍ້າຂອງ ທີ່ເປັນສາເຫດ ເຮັດໃຫ້ຕົວເມືອງ ບໍ່ມີຄວາມສະອາດຈົບງາມ.

**ມາດຕາ 24 (ປັບປຸງ) ການຖິ້ມຂີ້ເຫຍື້ອ ອອກຈາກຍານພາຫະນະ**

ໃນເວລາລົດແລ່ນ ແລະ ຈອດລົດຕາມເສັ້ນທາງ, ເວລາເຮືອແລ່ນ ຫຼື ເຮືອຈອດ, ຜູ້ຂັບລົດ, ຜູ້ຂັບເຮືອ, ຜູ້ຢູ່ໃນລົດ, ຜູ້ຢູ່ໃນເຮືອ ແລະ ຜູ້ໂດຍສານ ບໍ່ໃຫ້ຖິ້ມຂີ້ເຫຍື້ອ ອອກຈາກລົດ, ຈາກເຮືອ ໃສ່ຕາມເສັ້ນທາງບົກ, ທາງນໍ້າ ຕ້ອງຖິ້ມໃສ່ກະຕ່າ ຫຼື ຖັງຂີ້ເຫຍື້ອສາທາລະນະ, ລົດໂດຍສານທຸກຄັນ ຕ້ອງມີກະຕ່າ ຫຼື ຖົງຢາງເປັນບ່ອນເກັບມ້ຽນຂີ້ເຫຍື້ອ.

**ມາດຕາ 25 (ປັບປຸງ) ການຈູດເຜົາຂີ້ເຫຍື້ອ ແລະ ສິ່ງເສດເຫຼືອ**

ບໍ່ອະນຸຍາດ ໃຫ້ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງທຸກພາກສ່ວນ ຈູດເຜົາຂີ້ເຫຍື້ອ ແລະ ສິ່ງເສດເຫຼືອໃນຕົວເມືອງ, ຢູ່ເຂດຊຸມຊົນໃນຕົວເມືອງ, ໂຮງຈັກ, ໂຮງງານ, ຕະຫຼາດ, ໂຮງຮຽນ, ໂຮງໝໍ, ບ້ານ, ແຄມທາງ ແລະ ສະຖານທີ່ອື່ນໆ ທີ່ສ້າງມົນລະພິດເປັນຜົນກະທົບຕໍ່ສຸຂະພາບຂອງຄົນ, ສັດ ແລະ ສິ່ງແວດລ້ອມ.

## ໝວດທີ 5
## ການຄຸ້ມຄອງ ແລະ ການນຳໃຊ້ນໍ້າ, ສານເຄມີ, ແສງ, ສີ, ສຽງ, ກິ່ນ

**ມາດຕາ 26 (ປັບປຸງ) ການຄຸ້ມຄອງ ແລະ ການນຳໃຊ້ນໍ້າ**

ບັນດາສຳນັກງານອົງການ, ບຸກຄົນ, ນິຕິບຸກຄົນ ຫຼືໜ່ວຍທຸລະກິດຕ່າງໆ, ບ້ານ, ຄົວເຮືອນ ຕ້ອງມີບໍ່ບຳບັດນໍ້າເປື້ອນ, ນໍ້າເສຍ ໂດຍການຂ້າເຊື້ອ, ດັບກິ່ນດ້ວຍນໍ້າສະກັດຊີວະພາບ BE ( Bio Extract ) ແລະ ວິທີການອື່ນໆ ແລ້ວຈຶ່ງປ່ອຍຖິ້ມ ເພື່ອປ້ອງກັນຜົນກະທົບຕໍ່ສິ່ງແວດລ້ອມທາງທຳມະຊາດ ແລະ ສັງຄົມ.

**ມາດຕາ 27 (ປັບປຸງ) ການຄຸ້ມຄອງສິ່ງແວດລ້ອມ ການນຳໃຊ້ສານເຄມີ, ແສງ, ສີ, ສຽງ ແລະ ກິ່ນ**

ໂຮງຈັກ, ໂຮງງານ, ຜູ້ດຳເນີນທຸລະກິດ, ປະກອບການສ້ອມແປງພາຫະນະ, ຈອດໂລຫະ, ເຄາະຈອດ, ພົ່ນສີ, ສະຖານທີ່ບັນເທີງ, ຮ້ານອາຫານ ຕ້ອງຮັບປະກັນ ບໍ່ໃຫ້ເກີດມີສຽງເນືອງນັນ, ສິ່ງກິ່ນຂື່ວ, ເໝັນ ທີ່ພາໃຫ້ມີຜົນກະທົບຕໍ່ສຸຂະພາບຂອງຄົນ, ສັດ ແລະ ສິ່ງແວດລ້ອມອ້ອມຂ້າງ ຕ້ອງມີວິທີການ ແລະ ມາດຕະການ ເພື່ອບໍ່ໃຫ້ເກີດມີຜົນກະທົບຕໍ່ສິ່ງແວດລ້ອມ ເກີນມາດຕະຖານ ທີ່ກົດໝາຍກຳນົດໄວ້.

## ໝວດທີ 6
## ການຄຸ້ມຄອງ ຕົວເມືອງຫ້ວຍຊາຍ

**ມາດຕາ 28 (ປັບປຸງ) ຄະນະຮັບຜິດຊອບຄຸ້ມຄອງຕົວເມືອງ**

ປະກອບມີ:

+ ຂັ້ນແຂວງ

1. ພະແນກໂຍທາທິການ ແລະ ຂົນສົ່ງແຂວງ.

2. ອົງການພັດທະນາ ແລະ ບໍລິຫານຕົວເມືອງ.
3. ພະແນກຊັບພະຍາກອນ, ທຳມະຊາດ ແລະ ສິ່ງແວດລ້ອມແຂວງ.
4. ພະແນກກະສິກຳ ແລະ ປ່າໄມ້ແຂວງ.
5. ພະແນກການເງິນແຂວງ.
6. ພະແນກອຸດສາຫະກຳ-ການຄ້າແຂວງ.
7. ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ.
8. ກອງບັນຊາການ ປກສ ແຂວງ.

**+ ຂັ້ນເມືອງ**

1. ຫ້ອງວ່າການເມືອງຫ້ວຍຊາຍ.
2. ຫ້ອງການໂຍທາທິການ ແລະ ຂົນສົ່ງເມືອງ.
3. ຫ້ອງການການເງິນເມືອງ.
4. ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງ.
5. ຫ້ອງການກະສິກຳ-ປ່າໄມ້ເມືອງ.
6. ຫ້ອງການອຸດສາຫະກຳ-ການຄ້າເມືອງ.
7. ຫ້ອງການ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວເມືອງ.
8. ກອງບັນຊາການ ປກສ ເມືອງ.
9. ອົງການປົກຄອງບ້ານ 18 ບ້ານ.

**ມາດຕາ 29 (ປັບປຸງ) ຄວາມຮັບຜິດຊອບຂອງພະແນກໂຍທາທິການ ແລະ ຂົນສົ່ງແຂວງ.**

ພະແນກໂຍທາທິການ ແລະ ຂົນສົ່ງແຂວງຮັບຜິດຊອບຄຸ້ມຄອງຕົວເມືອງດັ່ງນີ້:

1. ມີໜ້າທີ່ເຜີຍແຜ່, ສຶກສາອົບຮົມປະຊາຊົນທຸກຊັ້ນຄົນພາຍໃນ ແລະ ຄົນຕ່າງປະເທດຢູ່ພາຍໃນຕົວເມືອງຫ້ວຍຊາຍ ໃຫ້ເຂົ້າຮ່ວມ ແລະ ຈັດຕັ້ງປະຕິບັດແນວທາງນະໂຍບາຍຂອງພັກ-ລັດ ແລະ ຂໍ້ຕົກລົງສະບັບນີ້ໃຫ້ໄດ້ຮັບຜົນດີ.
2. ກຳນົດແຜນຜັງເມືອງ (ຕົວເມືອງ) ຄືນໃໝ່ ເພື່ອສະເໜີໃຫ້ອົງການປົກຄອງແຂວງ, ກະຊວງໂຍທາທິການ ແລະ ຂົນສົ່ງ ໃນການພິຈາລະນາຮັບຮອງເອົາ.
3. ສ້າງແຜນງົບປະມານປະຈຳປີ ແລະ ລະດົມທຶນເຂົ້າໃນການກໍ່ສ້າງ, ສ້ອມແປງທາງດ້ານພື້ນຖານໂຄງລ່າງ ຄືມເປັນຕົ້ນ: ເສັ້ນທາງ, ຮ່ອງລະບາຍນ້ຳ ແລະ ອື່ນໆ.
4. ອອກໃບອະນຸຍາດການປຸກສ້າງ ຫຼື ສ້ອມແປງ, ມີເນື້ອທີ່ຫຼາຍກວ່າ 400 ຕາແມັດຂຶ້ນໄປ ແລະ ອອກໃບອະນຸຍາດການຈີກດິນ, ຖົມດິນ ແລະ ຂົນສົ່ງດິນ ຕາມການເຫັນດີດີ່ພາກສ່ວນທີ່ກ່ຽວຂ້ອງ.
5. ຈັດຕັ້ງປະຕິບັດ ແລະ ກວດກາການກໍ່ສ້າງ, ສ້ອມແປງໃຫ້ຖືກຕາມຜັງເມືອງ ແລະ ກົດໝາຍອື່ນໆທີ່ກ່ຽວຂ້ອງ.
6. ສະຫຼຸບການຈັດຕັ້ງປະຕິບັດວຽກງານຄຸ້ມຄອງຕົວເມືອງ ເປັນປະຈຳອາທິດ, ເດືອນ, ປະຈຳປີ ແລະ ຂໍທິດຊີ້ນຳຈາກຂັ້ນເທິງ ໃນການແກ້ໄຂວຽກງານຕ່າງໆ ແລະ ສະເໜີການຍ້ອງຍໍສັນລະເສີນຜູ້ທີ່ມີຜົນງານ.
7. ປະຕິບັດໜ້າທີ່ອື່ນໆຕາມການມອບໝາຍຈາກຂັ້ນເທິງ.

**ມາດຕາ 30 (ປັບປຸງ) ຄວາມຮັບຜິດຊອບຂອງອົງການພັດທະນາ ແລະ ບໍລິຫານຕົວເມືອງ.**

ອົງການພັດທະນາ ແລະ ບໍລິຫານຕົວເມືອງ (ອພບຕ) ຮັບຜິດຊອບຄຸ້ມຄອງຕົວເມືອງ ຄືດັ່ງນີ້:

1. ເຜີຍແຜ່, ສະໜອງຂໍ້ມູນຂ່າວສານ ແລະ ເອກະສານທີ່ກ່ຽວພັນກັບການພັດທະນາຕົວເມືອງ ໃຫ້ແກ່ອົງການປົກຄອງແຂວງ, ເມືອງ, ບ້ານ, ຜູ້ປະກອບການທຸລະກິດ ແລະ ອົງການຈັດຕັ້ງມະຫາຊົນ ເພື່ອປຸກລະດົມ

ປະຊາຊົນ ແລະ ທຸກພາກສ່ວນທົ່ວສັງຄົມ ໃຫ້ມີສ່ວນຮ່ວມເຂົ້າໃນການພັດທະນາຕົວເມືອງໃຫ້ຫຼາຍຂຶ້ນ.

2. ສ້າງແຜນແມ່ບົດ ການພັດທະນາໃນຂອບເຂດ ອພບຕ ຮັບຜິດຊອບ, ພ້ອມທັງປະສານສົມທົບ ກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອຮັບປະກັນ ໃຫ້ມີຄວາມສະຫງົບ, ຄວາມປອດໄພ, ຄວາມເປັນລະບຽບຮຽບຮ້ອຍ,ຄວາມສະອາດ ແລະ ຄວາມສວຍງາມຂອງຕົວເມືອງ.
3. ອອກໃບອະນຸຍາດການຕິດຕັ້ງປ້າຍໂຄສະນາ ໃນຂອບເຂດທີ່ ອພບຕ ຮັບຜິດຊອບ.
4. ຕິດຕາມ, ກວດກາ ການອະນາໄມຖະໜົນຫົນທາງ, ຮ່ອງລະບາຍນ້ຳ, ການບຳບັດນ້ຳເປື້ອນ, ການຕັດຫຍ້າແຄມທາງ ແລະ ປະດັບປະດາຕົວເມືອງ ໃຫ້ມີຄວາມສະອາດ ສວຍງາມ ໃນຂອບເຂດ ອພບຕ ຮັບຜິດຊອບ.
5. ຕິດຕາມ, ກວດກາ ແລະ ຄຸ້ມຄອງ ໄຟຟ້າສາທາລະນະ, ສວນສາທາລະນະ ແລະ ການດັບປະດາຕົວເມືອງຫ້ວຍຊາຍ ເປັນປົກກະຕິ.
6. ບໍລິການເກັບມ້ຽນຂີ້ເຫຍື້ອ ຕາມສະຖານທີ່ຕ່າງໆ ໃນຄວາມຮັບຜິດຊອບຂອງຕົນ ໃຫ້ມີຄວາມສະອາດ ແລະ ຄວາມເປັນລະບຽບຮຽບຮ້ອຍ.
7. ສ້າງແຫຼ່ງລາຍຮັບ ປະກອບສ່ວນ ເຂົ້າໃນການຄຸ້ມຄອງ ແລະ ພັດທະນາຕົວເມືອງ ໃຫ້ມີຄວາມເປັນລະບຽບຮຽບຮ້ອຍ, ສະອາດ ແລະ ສວຍງາມ.
8. ສະຫຼຸບ, ຕິດຕາມ, ກວດກາ ການຈັດຕັ້ງປະຕິບັດ ວຽກງານຄຸ້ມຄອງ, ພັດທະນາ ແລະ ບໍລິຫານຕົວເມືອງ ເປັນປະຈຳອາທິດ, ປະຈຳເດືອນ, ປະຈຳງວດ ແລະ ໝົດປີ ເພື່ອລາຍງານ ໃຫ້ຂັ້ນເທິງ ເປັນປົກກະຕິ ແລະ ຂໍທິດຊີ້ນຳຈາກຂັ້ນເທິງ ໃນການປະຕິບັດໜ້າທີ່ວຽກງານ ແລະ ພ້ອມທັງສະເໜີຂໍການຍ້ອງຍໍ ຕໍ່ຜູ້ທີ່ມີຜົນງານ ແລະ ລົງວິໄນຕໍ່ທຸກພາກສ່ວນທີ່ລະເມີດ ຂໍ້ຕົກລົງສະບັບນີ້.ປະຕິບັດໜ້າທີ່ອື່ນໆຕາມການມອບໝາຍຈາກຂັ້ນເທິງ.

**ມາດຕາ 31 (ໃໝ່ ) ຄວາມຮັບຜິດຊອບຂອງພະແນກການເງິນແຂວງ.**

ພະແນກການເງິນແຂວງ ຮັບຜິດຊອບຄຸ້ມຄອງຕົວເມືອງຫ້ວຍຊາຍ ດັ່ງນີ້:

1. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງຂອງເມືອງ ໃນການເຜີຍແຜ່, ການສຶກສາອົບຮົມ, ປຸກລະດົມປະຊາຊົນທຸກຊັ້ນຄົນພາຍໃນ ແລະ ຄົນຕ່າງປະເທດ ທີ່ອາໄສຢູ່ພາຍໃນຕົວເມືອງຫ້ວຍຊາຍ ໃຫ້ມີສ່ວນຮ່ວມປະກອບສ່ວນດ້ານທຶນຮອນ ເຂົ້າໃນການພັດທະນາຕົວເມືອງຫ້ວຍຊາຍ ຢ່າງເປັນເຈົ້າການ ແລະປະຕິບັດໃຫ້ມີຜົນສຳເລັດ.
2. ຄຸ້ມຄອງລາຍຮັບ-ລາຍຈ່າຍງົບປະມານແຫ່ງລັດ ແລະ ຄຸ້ມຄອງການນຳໃຊ້ທຶນປະກອບສ່ວນຈາກສັງຄົມ ເຂົ້າໃນການພັດທະນາຕົວເມືອງ ໃຫ້ສອດຄ່ອງ ຕາມກົດໝາຍ ແລະ ລະບຽບການ.
3. ປະສານສົມທົບ ກັບຫ້ອງການການເງິນເມືອງຫ້ວຍຊາຍ ໃນການອອກໃບຢັ້ງຢືນ ການມອບພັນທະອາກອນໃຫ້ແກ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຕາມກົດໝາຍ ແລະ ລະບຽບການ.
4. ຄຸ້ມຄອງ, ຕິດຕາມ, ກວດກາ ການຈັດຕັ້ງປະຕິບັດ ແຜນການເກັບລາຍຮັບ ປະຈຳເດືອນ, ງວດ ແລະ ໝົດປີ, ພ້ອມທັງຈັດເກັບລາຍຮັບທົ່ວໜ່ວຍທຸລະກິດ ໃຫ້ຖືກຕ້ອງ ຕາມກົດໝາຍ ແລະ ລະບຽບການ.
5. ຖອນ ແລະ ລົບລ້າງ ເລກປະຈຳຕົວຜູ້ເສຍອາກອນ, ໃບຢັ້ງຢືນການມອບອາກອນ ຂອງບຸກຄົນ ນິຕິບຸກຄົນ ແລະ ການຈັດຕັ້ງທີ່ລະເມີດກົດໝາຍ ແລະ ລະບຽບການ.
6. ເປັນເຈົ້າການໃນການຄຸ້ມຄອງ, ຕິດຕາມ, ກວດກາຖານລາຍ-ຮັບ ຈາກຊັບພະຍາກອນທຳມະຊາດ ເຊັ່ນ:

ຄ່າພາກຫຼວງ, ຄ່າປັບໄໝ ແລະ ຄ່າຊັບພະຍາກອນ ( ດິນດຳ-ດິນແດງ, ແຮ່-ຊາຍ ) ເພື່ອມອບເຂົ້າງົບປະມານແຫ່ງລັດ ໃຫ້ຖືກຕ້ອງ ຄົບຖ້ວນ ແລະ ທັນຕາມກຳນົດເວລາ.

7. ກຳນົດມາດຕະການ ແລະ ວິທີການໃນການຈັດເກັບລາຍຮັບ ຈາກຊັບພະຍາກອນທຳມະຊາດໃຫ້ມີຄວາມໂປ່ງໃສ, ມີປະສິດທິພາບ, ປະສິດທິຜົນ ແລະ ໃຫ້ສອດຄ່ອງຕາມລະບຽບ, ກົດໝາຍ.
8. ປະສານສົມທົບກັບ ພະແນການທີ່ກ່ຽວຂ້ອງ ເພື່ອກຳນົດລາຄາກາງ ໃນການຈັດຊື້-ຈັດຈ້າງ ກ່ຽວກັບ ການນຳໃຊ້ທຶນຂອງລັດ ເຂົ້າໃນການກໍ່ສ້າງ ຫຼື ການສ້ອມແປງ, ການສະໜອງສິນຄ້າ, ການບໍລິການວຽກງານໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ.
9. ສັງລວມ ແລະ ຕິດຕາມແຜນການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດປະຈຳປີ ໂດຍປະສານສົມທົບກັບຂະແໜງການກ່ຽວຂ້ອງ ຕາມລະບຽບການ.

**ມາດຕາ 32 (ໃໝ່ ) ຄວາມຮັບຜິດຊອບຂອງພະແນກຊັບພະຍາກອນ, ທຳມະຊາດ ແລະ ສິ່ງແວດລ້ອມແຂວງ.**

1. ໂຄສະນາເຜີຍແຜ່ ລະບຽບ, ກົດໝາຍ, ນິຕິກຳຕ່າງໆ ກ່ຽວກັບ ວຽກງານຊັບພະຍາກອນ ແລະ ສິ່ງແວດລ້ອມໃຫ້ພໍ່ແມ່ປະຊາຊົນບັນດາເຜົ່າ ທັງພາຍໃນ ແລະ ຕ່າງປະເທດ ຢູ່ໃນຕົວເມືອງຫ້ວຍຊາຍ ໃຫ້ຮັບຮູ້, ເຂົ້າໃຈ ແລະ ປະຕິບັດຕາມລະບຽບ, ກົດໝາຍ ໃຫ້ໄດ້ຮັບຜົນດີ.
2. ຕິດຕາມ, ກວດກາ ແລະ ຄຸ້ມຄອງ ການນຳໃຊ້ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມໃຫ້ສອດຄ່ອງກັບແຜນນຳໃຊ້ທີ່ດິນ ແລະ ຄຸ້ມຄອງສິ່ງແວດລ້ອມແບບຮອບດ້ານ.
3. ຕິດຕາມ, ກວດກາ, ຄຸ້ມຄອງ ແລະ ຊຸກຍູ້ບັນດາໂຮງຈັກ, ໂຮງງານ, ຮ້ານອາຫານ, ບ້ານພັກ, ໂຮງແຮມ, ຫົວໜ່ວຍທຸລະກິດ (SME) ໃຫ້ສ້າງແຜນຄຸ້ມຄອງ ແລະ ແກ້ໄຂ ຜົນກະທົບດ້ານສິ່ງແວດລ້ອມ.
4. ຕິດຕາມ, ກວດກາ, ຄຸ້ມຄອງ ແກ້ໄຂ ບັນຫາການຈັບຈອງທີ່ດິນ, ການຄອບຄອງທີ່ດິນ ທີ່ບໍ່ຖືກ ຕ້ອງກັບລະບຽບ ແລະ ກົດໝາຍ.

**ມາດຕາ 33 (ໃໝ່ ) ຄວາມຮັບຜິດຊອບຂອງພະແນກກະສິກຳ ແລະ ປ່າໄມ້ແຂວງ.**

1. ເຜີຍແຜ່, ໂຄສະນາ ບັນດາລະບຽບ, ກົດໝາຍ ແລະ ນິຕິກຳຕ່າງໆ ທີ່ກ່ຽວກັບ ການຄຸ້ມຄອງປົກປັກຮັກສາປ່າໄມ້ ແລະ ການອະນຸລັກຊັບພະຍາກອນປ່າໄມ້, ຊີວະນາງພັນສັດນ້ຳ - ສັດປ່າ ໃຫ້ຮັບຮູ້ ແລະ ເຂົ້າໃຈຢ່າງທົ່ວເຖິງ.
2. ຈັດຕັ້ງປະຕິບັດ ລະບຽບ ການຄຸ້ມຄອງ, ການປົກປັກຮັກສາ ແລະ ພັດທະນາເນື້ອທີ່ປ່າໄມ້ສີຂຽວຂອງແຂວງ ຢູ່ 2 ແຫ່ງຄື: ພູ 106 ແລະ ພູຈອມຈຸກ ຕາມຂໍ້ຕົກລົງຂອງເຈົ້າແຂວງ ສະບັບເລກທີ 177/ຈຂ.ບກ ລົງວັນທີ 9 ກຸມພາ 2017.
3. ອອກແຈ້ງການເຖິງບັນດາສຳນັກງານ-ອົງການ, ຕະຫຼອດຮອດປະຊາຊົນບັນດາເຜົ່າ ໃຫ້ເປັນເຈົ້າການປະກອບສ່ວນການປູກຕົ້ນໄມ້, ດອກໄມ້ປະດັບປະດາຕົວເມືອງ ຢູ່ຕາມແຕ່ລະເສັ້ນທາງໃນຕົວເມືອງຫ້ວຍຊາຍ ໃນວັນປູກຕົ້ນໄມ້ແຫ່ງຊາດຂອງທຸກໆປີ.
4. ຕິດຕາມ, ກວດກາ ແລະ ຄຸ້ມຄອງການນຳໃຊ້ທີ່ດິນກະສິກຳ ( ການປູກ - ການລ້ຽງ) ໃຫ້ຖືກຕ້ອງຕາມລະບຽບການ.
5. ລົງຊຸກຍູ້ບັນດາບ້ານ ກ່ຽວກັບ ການລ້ຽງສັດປະເພດຕ່າງໆຢູ່ໃນຕົວເມືອງຫ້ວຍຊາຍ ໂດຍກຳນົດເຂດ

ລ້ຽງສັດ ບໍ່ໃຫ້ລ້ຽງປ່ອຍສະຊາຍ ຕາມຖະໜົນຫົນທາງ ແລະ ເຂດສາທາລະນະ ສ້າງຄວາມເປິະເປື້ອນຕໍ່ສິ່ງແວດລ້ອມ ແລະ ກີດຂວາງການສັນຈອນພາໃຫ້ເກີດອຸປະຕິເຫດ.

6. ເຂົ້າຮ່ວມຂະບວນການຕ່າງໆກັບຂະແໜງການທີ່ກ່ຽວຂ້ອງໃນການຄຸ້ມຄອງ ແລະ ພັດທະນາຕົວເມືອງ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ແລະ ຕາມການແຕ່ງຕັ້ງມອບໝາຍຂອງຂັ້ນເທິງ.

**ມາດຕາ 34 (ໃໝ່ ) ຄວາມຮັບຜິດຊອບຂອງພະແນກອຸດສາຫະກໍາ ແລະ ການຄ້າແຂວງ.**

1. ໂຄສະນາເຜີຍແຜ່ ແລະ ປຸກລະດົມພໍ່ແມ່ປະຊາຊົນບັນດາເຜົ່າ, ຜູ້ປະກອບການທຸລະກິດປະເພດຕ່າງໆ ທຸກຊັ້ນຄົນພາຍໃນ ແລະ ຕ່າງປະເທດ ໃຫ້ເປັນເຈົ້າການການປະຕິບັດສິດ ແລະ ພັນທະຂອງຕົນບົນພື້ນຖານກົດໝາຍ, ນິຕິກໍາຕ່າງໆ ທີ່ຕິດພັນກັບການສ້າງຄວາມເປັນລະບຽບຮຽບຮ້ອຍ ຂອງຕົວເມືອງຫ້ວຍຊາຍ.
2. ໂຄສະນາເຜີຍແຜ່ກົດໝາຍ ແລະ ນິຕິກໍາໃຕ້ກົດໝາຍ ໃຫ້ສອດຄ່ອງກັບ ຈຸດພິເສດ-ທ່າແຮງຕົວຈິງຂອງບັນດາຫົວໜ່ວຍຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ, ກາງ, ໃຫ່ຍ ທີ່ເປັນກໍາລັງແຮງ ໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມ ແລະ ຄຸ້ມຄອງຕົວເມືອງຫ້ວຍຊາຍ ໃນເງື່ອນໄຂໃໝ່ໃຫ້ມີປະສິດທິຜົນ.
3. ເປັນເຈົ້າການຕິດຕາມ, ກວດກາ ແລະ ຄຸ້ມຄອງບັນດາທຸລະກິດ-ຜູ້ປະກອບການຮ້ານຄ້າຂາຍຍົກ-ຄ້າຂາຍຍ່ອຍ, ຕະຫຼາດ, ຮ້ານຊັບພະສິນຄ້າ, ໂຮງຈັກ, ໂຮງງານ, ທຸລະກິດປະເພດຕ່າງໆ ໃຫ້ເຂົ້າສູ່ກົດໝາຍ ແລະ ລະບຽບການ, ພ້ອມທັງມີມາດຕະການ ຕໍ່ການລະເມີດ ເພື່ອຄວາມເປັນລະບຽບຮຽບຮ້ອຍ ໃນຕົວເມືອງຫ້ວຍຊາຍ ເປັນຕົ້ນ: ການວາງເຄື່ອງຂາຍ ທີ່ກວມເອົາທາງຍ່າງແຄມທາງ.
4. ຮ່ວມກັບ ພາກສ່ວນທີ່ກ່ຽວຂ້ອງ ຂັ້ນແຂວງ ແລະ ເມືອງ ເພື່ອຈັດຕັ້ງ ແລະ ເຄື່ອນໄຫວປະຕິບັດ ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງວຽກງານອຸດສາຫະກໍາ ແລະ ການຄ້າ ດ້ວຍຄວາມຮັບຜິດຊອບສູງ.

**ມາດຕາ 35 (ໃໝ່ ) ຄວາມຮັບຜິດຊອບຂອງພະແນກຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວແຂວງ.**

1. ໂຄສະນາເຜີຍແຜ່ຂໍ້ມູນຂ່າວສານ ຜ່ານສື່ຕ່າງໆ ໃຫ້ທົ່ວສັງຄົມ ຮັບຮູ້ ແລະ ເຂົ້າໃຈຢ່າງທົ່ວເຖິງ.
2. ອານຸລັກ, ເສີມຂະຫຍາຍມູນເຊື້ອວັດທະນະທໍາອັນດີງາມ ແລະ ຄຸ້ມຄອງການເຄື່ອນໄຫວ ດ້ານວັດທະນະທໍາ ໃຫ້ເຂົ້າສູ່ລະບຽບ, ກົດໝາຍ ເປັນຕົ້ນ: ບຸນປະເພນີ-ພິທີກໍາຂອງບັນດາເຜົ່າ, ປ້າຍໂຄສະນາ, ການພິມຈໍາໜ່າຍ, ສິລະປະການສະແດງ (ເທັກ-ດົນຕີຣ), ທີ່ດິນວັດທະນະທໍາ ແລະ ແຫຼ່ງມໍລະດົກທາງດ້ານວັດທະນະທໍາ ປະຫວັດສາດ ແລະ ທໍາມະຊາດ.
3. ພັດທະນາ ແລະ ຄຸ້ມຄອງການທ່ອງທ່ຽວໃຫ້ມີຄຸນນະພາບ ຕາມທິດສີຂຽວ ເປັນຕົ້ນ: ສະຖານທີ່ທ່ອງທ່ຽວ, ເຮືອນພັກ ໂຮງແຮມ, ຣີສອດ,ຫ້ອງແຖວ, ຮ້ານອາຫານ-ກິນດື່ມ, ຮ້ານບັນເທີງ ແລະ ຜະລິດຕະພັນການທ່ອງທ່ຽວຕ່າງໆ.

**ມາດຕາ 36 (ໃໝ່ ) ຄວາມຮັບຜິດຊອບຂອງກອງບັນຊາການ ປກສ ແຂວງ.**

1. ຈັດຕັ້ງໂຄສະນາປຸກຈິດສໍານຶກໃຫ້ຄວາມຮູ້, ຄວາມເຂົ້າໃຈກ່ຽວກັບລະບຽບ, ກົດໝາຍວ່າດ້ວຍການຈາລະຈອນທາງບົກ ໃຫ້ທົ່ວສັງຄົມ ໃຫ້ເຂົ້າໃຈກ່ຽວກັບການນໍາໃຊ້ລົດ, ນໍາໃຊ້ຖະໜົນຫົນທາງ ໃນການສັນຈອນໄປ-ມາ ໃຫ້ມີສະຕິຕື່ນຕົວ ໃນການປະຕິບັດ ລະບຽບການສັນຈອນ.
2. ສຸມໃສ່ເຮັດວຽກງານລະບາຍການສັນຈອນ ຢູ່ຕາມຈຸດທາງແຍກ, ງານບຸນປະເພນີຕ່າງໆ ເພື່ອອໍານວຍຄວາມສະດວກໃຫ້ແກ່ຜູ້ຊົມໃຊ້ລົດໃຊ້ຖະໜົນ ໃຫ້ມີຄວາມເປັນລະບຽບຮຽບຮ້ອຍ ສະດວກປອດໄພໃນການສັນຈອນ.
3. ຈັດສັນຄວາມເປັນລະບຽບຮຽບຮ້ອຍ ຕາມເສັ້ນທາງຫຼັກ, ຕາມສະຖານທີ່ຊຸມຊົນ ເປັນຕົ້ນ: ຢູ່ຕະຫຼາດ, ຄິວ

ລົດ, ໂຮງຮຽນ, ໂຮງໝໍ ແລະ ສຳນັກງານອົງການ ເພື່ອໃຫ້ການສັນຈອນ ໄປ-ມາ ສະດວກສະບາຍ, ການຕິດຕັ້ງປ້າຍຈາລະຈອນ ຢູ່ຈຸດເສັ້ນທາງບ່ອນທີ່ມີຄວາມສ່ຽງເກີດອຸປະຕິເຫດໂດຍສົມທົບກັບ ພະແນກ ຍທຂ ແລະ ອົງການພັດທະນາຕົວເມືອງ ແລະ ບໍລິຫານຕົວເມືອງ.

4. ກວດກາການສັນຈອນ ຢູ່ໃນຕົວເມືອງ ເປັນຕົ້ນ: ການຂົນສົ່ງດິນ, ຫີນ-ແຮ່-ຊາຍ ທີ່ສ້າງຄວາມເປິະເປື້ອນ ແລະ ບໍ່ຖືກຕ້ອງຕາມລະບຽບ, ກົດໝາຍ ທີ່ກຳນົດໄວ້ ແລະ ການຈອດລົດຢູ່ບ່ອນທີ່ມີປ້າຍຫ້າມຈອດ, ຈອດຢູ່ບ່ອນທາງຍ່າງ, ຈອດຖາວອນຢູ່ບ່ອນຊຸມຊົນ, ກຸ່ມແກ້ງຂັບຂີ່ລົດໄວໃຊ້ສຽງດັງ, ຂີ່ລົດຂວາງທາງ ຫຼາຍຄັນ ເພື່ອປ້ອງກັນສະກັດກັ້ນ ບໍ່ໃຫ້ມີການລະເມີດ ກົດຈາລະຈອນ ທີ່ພາໃຫ້ເກີດອຸປະຕິເຫດ.

**ມາດຕາ 37 (ປັບປຸງ) ຄວາມຮັບຜິດຊອບຂອງຫ້ອງການໂຍທາທິການ ແລະ ຂົນສົ່ງເມືອງຫ້ວຍຊາຍ.**

ຫ້ອງການໂຍທາທິການ ແລະ ຂົນສົ່ງເມືອງຫ້ວຍຊາຍ ຮັບຜິດຊອບຄຸ້ມຄອງຕົວເມືອງດັ່ງນີ້:

1 ໂຄສະນາເຜີຍແຜ່ຂໍ້ຕົກລົງສະບັບນີ້ ໃຫ້ປະຊາຊົນທຸກຊັ້ນຄົນພາຍໃນ ແລະ ຄົນຕ່າງປະເທດທີ່ດຳລົງຊີວິດຢູ່ໃນຕົວເມືອງຫ້ວຍຊາຍ ເຂົ້າຮ່ວມໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ໃຫ້ໄດ້ຮັບຜົນດີ.

2 ຈັດຕັ້ງປະຕິບັດຜັງເມືອງຕາມການມອບໝາຍຂອງພະແນກໂຍທາທິການ ແລະ ຂົນສົ່ງແຂວງ ອອກໃບອະນຸຍາດການປຸກສ້າງ ຫຼື ສ້ອມແປງ, ມີເນື້ອທີ່ນ້ອຍກວ່າ 400 ຕາແມັດ.

3 ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍຂອງຂັ້ນເທິງ.

**ມາດຕາ 38 (ປັບປຸງ) ຄວາມຮັບຜິດຊອບຂອງຫ້ອງວ່າການເມືອງຫ້ວຍຊາຍ.**

ຫ້ອງວ່າການເມືອງຫ້ວຍຊາຍ ຮັບຜິດຊອບຄຸ້ມຄອງຕົວເມືອງດັ່ງນີ້:

1. ໂຄສະນາເຜີຍແຜ່, ສຶກສາອົບຮົມໃຫ້ທຸກຊັ້ນຄົນພາຍໃນ ແລະ ຕ່າງປະເທດທີ່ດຳລົງຊີວິດຢູ່ພາຍໃນເມືອງຫ້ວຍຊາຍ ເຂົ້າຮ່ວມໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ໃຫ້ໄດ້ຮັບຜົນດີ.
2. ຊີ້ນຳ, ຄຸ້ມຄອງ, ຕິດຕາມ, ກວດກາ ການອະນຸຍາດປຸກສ້າງ, ການພັດທະນາຢູ່ໃນຕົວເມືອງຫ້ວຍຊາຍ ໃຫ້ຖືກຕ້ອງ ແລະ ສອດຄ່ອງ ກັບລະບຽບ, ກົດໝາຍ, ພ້ອມທັງຍ້ອງຍໍ ແລະ ລົງວິໄນ ຕໍ່ທຸກພາກສ່ວນທີ່ລະເມີດ ຂໍ້ຕົກລົງສະບັບນີ້.
3. ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍຂອງແຂວງ.

**ມາດຕາ 39 (ໃໝ່ ) ຫ້ອງການການເງິນເມືອງ**

1. ມີໜ້າທີ່ເຜີຍແຜ່,ສຶກສາອົບຮົມ,ປຸກລະດົມປະຊາຊົນທຸກຊັ້ນຄົນພາຍໃນ ແລະ ຄົນຕ່າງປະເທດ ທີ່ອາໄສຢູ່ໃນຕົວເມືອງຫ້ວຍຊາຍໃຫ້ມີສ່ວນຮ່ວມປະກອບສ່ວນດ້ານທຶນຮອນເຂົ້າໃນການພັດທະນາເມືອງຫ້ວຍຊາຍຢ່າງເປັນເຈົ້າການ ແລະ ປະຕິບັດ ໃຫ້ໄດ້ຮັບຜົນດີ.
2. ປະສານສົມທົບ ກັບ ພະແນກການເງິນແຂວງ ໃນການຄຸ້ມຄອງລາຍຮັບ-ລາຍຈ່າຍ, ການນຳໃຊ້ທຶນປະກອບສ່ວນເຂົ້າໃນການພັດທະນາຕົວເມືອງ ໃຫ້ສອດຄ່ອງ ຕາມກົດໝາຍ ແລະ ລະບຽບການ.
3. ຄຸ້ມຄອງ, ຕິດຕາມ, ກວດກາ ການຈັດຕັ້ງປະຕິບັດ ແຜນການເກັບລາຍຮັບ ປະຈຳເດືອນ, ງວດ ແລະ ປະຈຳປີ, ພ້ອມທັງຈັດເກັບລາຍຮັບທົວໜ່ວຍທຸລະກິດ ໃຫ້ຖືກຕ້ອງ ຕາມກົດໝາຍ ແລະ ລະບຽບການ.
4. ເປັນເຈົ້າການໃນການຄຸ້ມຄອງ, ຕິດຕາມ, ກວດກາຖານລາຍ-ຮັບ ຈາກຊັບພະຍາກອນທຳມະຊາດເຊັ່ນ: ຄ່າພາກຫຼວງ, ຄ່າປັບໄໝ ແລະ ຄ່າຊັບພະຍາກອນ ( ດິນດຳ-ດິນແດງ, ແຮ່-ຊາຍ )ເພື່ອມອບເຂົ້າງົບປະມານແຫ່ງລັດ ໃຫ້ຖືກຕ້ອງ ຄົບຖ້ວນ ແລະ ທັນຕາມກຳນົດເວລາ.
5. ກຳນົດມາດຕະການ ແລະ ວິທີການໃນການຈັດເກັບລາຍຮັບ ຈາກຊັບພະຍາກອນທຳມະຊາດໃຫ້ມີຄວາມ

ໂປ່ງໃສ, ມີປະສິດທິພາບ, ປະສິດທິຜົນ ແລະ ໃຫ້ສອດຄ່ອງຕາມລະບຽບ, ກົດໝາຍ.

**ມາດຕາ 40 (ໃໝ່ ) ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງ**

1. ໂຄສະນາເຜີຍແຜ່ລະບຽບ, ກົດໝາຍ, ນິຕິກຳຕ່າງໆ ໃຫ້ຜູ້ປະກອບການຕ່າງໆ ແລະ ພໍ່ແມ່ປະຊາຊົນບັນດາເຜົ່າ ໃຫ້ຮັບຮູ້, ເຂົ້າໃຈຕໍ່ກັບການຈັດຕັ້ງປະຕິບັດ ລະບຽບ, ກົດໝາຍ ໃຫ້ໄດ້ຮັບຜົນດີ.
2. ປະສານສົມທົບກັບພະແນກສາຍຕັ້ງຂອງແຂວງ ໃນການຕິດຕາມ, ກວດກາ, ຄຸ້ມຄອງກິດຈະການຕ່າງໆ ເປັນຕົ້ນ: ໂຮງຈັກ, ໂຮງງານ, ໂຮງແຮມ, ບ້ານພັກ, ຮ້ານອາຫານ ໃນການຄຸ້ມຄອງດ້ານສິ່ງແວດລ້ອມ ແລະ ການແກ້ໄຂບັນຫາການຈັບຈອງດິນ ໃຫ້ຖືກຕ້ອງຕາມລະບຽບ ແລະ ກົດໝາຍ.

**ມາດຕາ 41 (ໃໝ່ ) ຄວາມຮັບຜິດຊອບຂອງຫ້ອງການກະສິກຳ ແລະ ປ່າໄມ້ເມືອງ.**

1. ເຜີຍແຜ່, ໂຄສະນາບັນດາລະບຽບ, ກົດໝາຍ ແລະ ນິຕິກຳຕ່າງໆ ທີ່ກ່ຽວກັບ ການຄຸ້ມຄອງປົກປັກຮັກສາປ່າໄມ້ ແລະ ການອະນຸລັກຊັບພະຍາກອນປ່າໄມ້, ຊີວະນາໆພັນສັດນ້ຳ - ສັດປ່າ.
2. ຄຸ້ມຄອງ ປົກປັກຮັກສາ ແລະ ພັດທະນາເນື້ອທີ່ປ່າໄມ້ສີຂຽວ ຢູ່ 2 ແຫ່ງຄື: ພູ 106 ແລະ ພູຈອມຈຸກ.
3. ປະສານສົມທົບ ກັບ ພະແນກສາຍຕັ້ງ ໂດຍການອອກແຈ້ງການ ໃຫ້ບັນດາສຳນັກງານ-ອົງການອ້ອມຂ້າງເມືອງ,ຕະຫຼອດຮອດປະຊາຊົນບັນດາເຜົ່າ ໃຫ້ເປັນເຈົ້າການປະກອບສ່ວນການປູກຕົ້ນໄມ້, ດອກໄມ້ປະດັບປະດາຕົວເມືອງ ຢູ່ຕາມແຕ່ລະເສັ້ນທາງໃນຕົວເມືອງຫ້ວຍຊາຍ ຕາມແຜນຂອງເມືອງທີ່ໄດ້ກຳນົດໄວ້.
4. ລົງຊຸກຍູ້ບັນດາບ້ານ ກ່ຽວກັບ ການລ້ຽງສັດປະເພດຕ່າງໆ ຢູ່ໃນຕົວເມືອງຫ້ວຍຊາຍ ໂດຍກຳນົດເຂດປູກ-ເຂດລ້ຽງສັດໃຫຍ່, ບໍ່ໃຫ້ລ້ຽງປ່ອຍຊະຊາຍ ຢ່າງຕາມທ້ອງຖະໜົນຫົນທາງ ແລະ ເຂດສາທາລະນະ ສ້າງຄວາມເປິເປື້ອນຕໍ່ສິ່ງແວດລ້ອມ, ກີດຂວາງການສັນຈອນ ພາໃຫ້ເກີດອຸປະຕິເຫດ.
5. ເຂົ້າຮ່ວມຂະບວນການຕ່າງໆກັບຂະແໜງການທີ່ກ່ຽວຂ້ອງໃນການຄຸ້ມຄອງ ແລະ ພັດທະນາຕົວເມືອງຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ແລະ ຕາມການມອບໝາຍຂອງຂັ້ນເທິງ.

**ມາດຕາ 42 (ໃໝ່ ) ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ**

1. ໂຄສະນາເຜີຍແຜ່ກົດໝາຍ ແລະ ນິຕິກຳຕ່າງໆ ໃຫ້ຜູ້ປະກອບການທຸລະກິດປະເພດຕ່າງໆ ໃຫ້ເປັນເຈົ້າການປະຕິບັດ ຕາມລະບຽບທີ່ກຳນົດໄວ້ ເພື່ອສ້າງຄວາມເປັນລະບຽບຮຽບຮ້ອຍ ໃນຕົວເມືອງຫ້ວຍຊາຍ.
2. ເປັນເຈົ້າການປະສານສົມທົບ ກັບ ພະແນກສາຍຕັ້ງ ການລົງຕິດຕາມ, ກວດກາ ແລະ ຄຸ້ມຄອງບັນດາທຸລະກິດ-ຜູ້ປະກອບການຮ້ານຄ້າຂາຍຍົກ-ຄ້າຂາຍຍ່ອຍ, ຕະຫຼາດ, ຮ້ານຊັບພະສິນຄ້າ, ໂຮງຈັກ, ໂຮງງານ, ທຸລະກິດປະເພດຕ່າງໆ ໃຫ້ເຂົ້າສູ່ກົດໝາຍ ແລະ ລະບຽບການ.
3. ປະສານສົມທົບກັບ ພາກສ່ວນທີ່ກ່ຽວຂ້ອງ ຂັ້ນແຂວງ ແລະ ເມືອງ ເພື່ອຈັດຕັ້ງ ແລະ ເຄື່ອນໄຫວປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ຂອງວຽກງານອຸດສາຫະກຳ ແລະ ການຄ້າດ້ວຍຄວາມຮັບຜິດຊອບສູງ.

**ມາດຕາ 43 (ໃໝ່ ) ຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວເມືອງ**

1. ໂຄສະນາເຜີຍແຜ່ຂໍ້ມູນຂ່າວສານ ຜ່ານສື່ຕ່າງໆ ໃຫ້ທົ່ວສັງຄົມ ຮັບຮູ້ ແລະ ເຂົ້າໃຈ.
2. ຕິດຕາມ, ກວດກາ ແລະ ຄຸ້ມຄອງປ້າຍໂຄສະນາ, ການພິມຈຳໜ່າຍ ໃຫ້ເຂົ້າສູ່ລະບຽບ, ກົດໝາຍ.
3. ຕິດຕາມ, ກວດກາ ແລະ ຄຸ້ມຄອງ ສະຖານທີ່ທ່ອງທ່ຽວ, ເຮືອນພັກ, ຫ້ອງແຖວ, ຮ້ານອາຫານ-ກິນດື່ມ ໃຫ້ທັນເຂົ້າສູ່ລະບຽບ ແລະ ກົດໝາຍ.

**ມາດຕາ 44 (ໃໝ່ ) ຄວາມຮັບຜິດຊອບຂອງກອງບັນຊາການ ປກສ ເມືອງ.**

1. ປະສານສົມທົບກັບ ປກສ ແຂວງ, ພະແນກ ຍທຂ ແຂວງ ຈັດຕັ້ງໂຄສະນາ ກ່ຽວກັບ ລະບຽບ, ກົດໝາຍ ວ່າດ້ວຍການຈາລະຈອນທາງບົກ ໃຫ້ທົ່ວສັງຄົມ ຮັບຮູ້ເຂົ້າໃຈ.
2. ລະບາຍການສັນຈອນ ຢູ່ຕາມຈຸດທາງແຍກ, ງານບຸນປະເພນີຕ່າງໆ ເພື່ອອຳນວຍຄວາມສະດວກໃຫ້ແກ່ຜູ້ຊົມໃຊ້ລົດ, ໃຊ້ຖະໜົນ ມີຄວາມເປັນລະບຽບຮຽບຮ້ອຍ ສະດວກປອດໄພໃນການສັນຈອນ.
3. ຈັດສັນຄວາມເປັນລະບຽບຮຽບຮ້ອຍ ຕາມເສັ້ນທາງຫຼັກ, ສະຖານທີ່ຊຸມຊົນ ເປັນຕົ້ນ: ຢູ່ຕະຫຼາດມ່ວງແກ້ວ ຄິວລົດພາຍໃນເມືອງ ຫາ ເມືອງ ແລະ ສຳນັກງານ-ອົງການຂອງເມືອງ ເພື່ອໃຫ້ການສັນຈອນ ໄປ-ມາ ໄດ້ສະດວກສະບາຍ.
4. ກວດກາການສັນຈອນ, ການຈອດລົດຢູ່ບ່ອນທີ່ມີປ້າຍຫ້າມຈອດ, ຈອດຢູ່ບ່ອນທາງຍ່າງ, ຢູ່ເສັ້ນທາງກາງເມືອງ (ທາງຂຶ້ນ - ທາງລ່ອງ ), ຈັດສັນການສັນຈອນຢູ່ເສັ້ນທາງ 4 ແຍກຫ້ອງວ່າການແຂວງ ແລະ ຈັດສັນຄວາມເປັນລະບຽບຮຽບຮ້ອຍຢູ່ຕະຫຼາດມ່ວງແກ້ວ, ປະສານສົມທົບກັບ ປກສ ແຂວງ ແກ້ໄຂບັນຫາການຂີ່ລົດກັງແງະ, ກຸ່ມແກ້ງຂັບຂີ່ລົດໄວໃຊ້ສຽງດັງ, ຂີ່ລົດຂວາງທາງຫຼາຍຄັນ ເພື່ອປ້ອງກັນສະກັດກັ້ນປະກົດການຫຍໍ້ທໍ້ໃຫ້ຫຼຸດລົງ ແລະ ບໍ່ໃຫ້ມີການລະເມີດ ກົດຈາລະຈອນ ທີ່ພາໃຫ້ເກີດອຸປະຕິເຫດ.
5. ປະຕິບັດໜ້າທີ່ອື່ນຕາມການມອບຂອງເມືອງ ແລະ ສາຍຕັ້ງຂັ້ນແຂວງຂອງຕົນ.

**ມາດຕາ 45 (ປັບປຸງ) ຄວາມຮັບຜິດຊອບຂອງອົງການປົກຄອງບ້ານ**

ອົງການປົກຄອງບ້ານ ຮັບຜິດຊອບຄຸ້ມຄອງຕົວເມືອງດັ່ງນີ້:

1. ໂຄສະນາເຜີຍແຜ່ຂໍ້ຕົກລົງສະບັບນີ້ ໃຫ້ທຸກຊັ້ນຄົນພາຍໃນບ້ານຂອງຕົນ ເຂົ້າຮ່ວມໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.
2. ນຳພາ, ປຸກລະດົມປະຊາຊົນພາຍໃນບ້ານ ປະກອບສ່ວນເຂົ້າໃນການສ້ອມແປງຖະໜົນຫົນທາງ, ຕັດຫຍ້າແຄມທາງ, ຕັດຫຍ້າດິນເປົ່າຫວ່າງຢູ່ໃນບ້ານຂອງຕົນ, ອະນາໄມຮ່ອງລະບາຍນ້ຳ ໃຫ້ມີຄວາມສະອາດ ແລະ ຄວາມເປັນລະບຽບຮຽບຮ້ອຍ.
3. ມອບຄວາມຮັບຜິດຊອບ ໃຫ້ຄອບຄົວພາຍໃນບ້ານ, ສຳນັກງານຕ່າງໆ ຢູ່ພາຍໃນບ້ານຂອງຕົນ ເປັນເຈົ້າການປົກປັກສາຄວາມສະອາດ, ຄວາມເປັນລະບຽບຮຽບຮ້ອຍ ແລະ ລວມທັງການປະດັບປະດາປູກຕົ້ນໄມ້, ປູກດອກໄມ້ ໃຫ້ມີຄວາມສວຍງາມ ເພື່ອພັດທະນາໄປຕາມທິດສີຂຽວ ກຳນົດໄວ້.
4. ນຳພາ, ປຸກລະດົມ ແຕ່ລະຄອບຄົວ ອະນາໄມຮ່ອງລະບາຍນ້ຳຢູ່ເຮືອນຂອງຕົນ, ຕ້ອງມີຂຸມພັກນ້ຳ ຈາກການນຳໃຊ້ນ້ຳຈາກຄົວເຮືອນ, ຫ້າງ, ຮ້ານ ແລະ ສຳນັກງານຕ່າງ ເພື່ອບໍ່ສົ່ງຜົນກະທົບຕໍ່ຜູ້ອື່ນ ແລະ ສັງຄົມ.
5. ປຸກລະດົມ, ຊຸກຍູ້ ໃຫ້ທຸກຄອບຄົວ ໃນຕົວເມືອງຫ້ວຍຊາຍ ມີພັນທະໃນການປະກອບສ່ວນທຶນ ຕໍ່ກັບການພັດທະນາຕົວເມືອງ ເປັນຕົ້ນ: ການສ້ອມແປງໄຟຟ້າເຍືອງ, ການທຳຄວາມສະອາດຖະໜົນຫົນທາງ,ຊຳລະຄ່າກະແສໄຟຟ້າສາທາລະນະ, ຄ່າບຳບັດນ້ຳເສຍ ແລະ ອື່ນໆ.ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍຂອງເມືອງ ແລະ ຂອງແຂວງ.

**ມາດຕາ 46 (ປັບປຸງ) ຄວາມຮັບຜິດຊອບຂອງອົງການຈັດຕັ້ງ ແລະ ພົນລະເມືອງ.**

ເພື່ອເຮັດໃຫ້ການຄຸ້ມຄອງ ແລະ ພັດທະນາຕົວເມືອງຫ້ວຍຊາຍ ໄດ້ດຳເນີນໄປຢ່າງມີປະສິດທິຜົນ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງຕ່າງໆ ຕ້ອງປະຕິບັດ ຕາມລະບຽບຂອງບ້ານ ແລະ ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງ ແລະ ພັດທະນາຕົວເມືອງຫ້ວຍຊາຍ ຢ່າງເຂັ້ມງວດ ຄືດັ່ງນີ້:

1. ສຳນັກງານ-ອົງການຂອງລັດ ແລະ ເອກະຊົນ, ຜູ້ປະກອບການຕ່າງໆ, ບັນດາບ້ານ, ຕະຫຼອດຮອດທຸກຄົວເຮືອນໃນຕົວເມືອງຫ້ວຍຊາຍ ຕ້ອງມີຄວາມຮັບຜິດຊອບ ໃນການຖາງຫຍ້າແຄມທາງ, ປັດກວາດສະຖານທີ່ຢູ່ອາໄສ ແລະ ຂອບເຂດຄວາມຮັບຜິດຊອບຂອງຕົນ ໃຫ້ສະອາດສວຍງາມ, ປະກອບສ່ວນທຶນຮອນ ເຂົ້າໃນການກໍ່ສ້າງ, ສ້ອມແປງຖະໜົນຫົນທາງ, ໄຟຟ້າເຍືອງທາງ, ຮ່ອງລະບາຍນ້ຳ ໃຫ້ນຳໃຊ້ຍາວນານ, ອະນາໄມຂອບເຂດດິນເຮືອນ, ດິນສວນ, ດິນເປົ່າຫວ່າງ ບໍ່ປ່ອຍໃຫ້ຮົກເຮື້ອ, ເປິເປື້ອນ ທີ່ຈະສ້າງຜົນກະທົບຕໍ່ສິ່ງແວດລ້ອມ.
2. ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທຸກພາກສ່ວນໃນສັງຄົມ ທີ່ມີຕອນດິນເປົ່າຫວ່າງ ຫຼື ມີສິ່ງກໍ່ສ້າງຢູ່ແຄມທາງ ໃນຕົວເມືອງ ຕ້ອງປົກປັກຮັກສາ, ອະນາໄມ ໃຫ້ມີຄວາມສະອາດຈົບງາມ ແລະ ເປັນລະບຽບຮຽບຮ້ອຍ ບໍ່ປະປ່ອຍໃຫ້ຮົກເຮື້ອເປິເປື້ອນ.
3. ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທຸກພາກສ່ວນໃນສັງຄົມ ຕ້ອງເປັນເຈົ້າການ ໃນການປະດັບປະດາເຮືອນຊານບ້ານຊ່ອງ, ສຳນັກງານ-ອົງການຕ່າງໆ ເຊັ່ນ: ໃຕ້ໄຟຟ້າ, ປູກຕົ້ນໄມ້, ປູກດອກໄມ້ ຢູ່ໜ້າເຮືອນ, ຫ້າງ, ຮ້ານອາຫານ ແລະ ສຳນັກງານ-ອົງການ ເພື່ອເຮັດໃຫ້ຕົວເມືອງ ເປັນຕົວເມືອງສະຫວ່າງ, ຕົວເມືອງສີຂຽວ ຕາມແຜນການຂອງເມືອງ ໄດ້ກຳນົດໄວ້.
4. ຜູ້ປຸກສ້າງ ແລະ ຕໍ່ເຕີມເຄຫາສະຖານຢູ່ຕາມແຄມທາງ ລວມທັງສຳນັກງານອົງການຂອງພາກລັດ ແລະ ພາກເອກະຊົນ ຕະຫຼອດຮອດເຮືອນປະຊາຊົນ ຕ້ອງເປັນເຈົ້າ ການປົກປັກຮັກສາຄວາມສະອາດ ເປັນຕົ້ນ: ຕັດຫຍ້າແຄມທາງ, ອະນາໄມໜ້າທາງ, ທາງຍ່າງ ແລະ ຮ່ອງລະບາຍນ້ຳ ທີ່ຢູ່ຂອບເຂດຄວມຮັບຜິດຊອບຂອງຕົນ ໃຫ້ມີຄວາມສະອາດສວຍງາມ.
5. ບັນດາສຳນັກງານອົງການ, ໂຮງຈັກ-ໂຮງງານ, ໂຮງຮຽນ, ໂຮງໝໍ, ຫົວໜ່ວຍທຸລະກິດ, ຄົວເຮືອນ ຕ້ອງໄດ້ມີສ່ວນຮ່ວມ ປະກອບສ່ວນທຶນ ເປັນຄ່າພັນທະ ໃຊ້ຈ່າຍເຂົ້າໃນວຽກງານຄຸ້ມຄອງ ແລະ ພັດທະນາຕົວເມືອງຫ້ວຍຊາຍ ເປັນຕົ້ນ: ຄ່າກະແສໄຟຟ້າສາທາລະນະ, ຄ່າສ້ອມແປງໄຟຟ້າເຍືອງທາງ, ຄ່ານ້ຳປະປາສວນດອກໄມ້ສາທາລະນະ, ການອະນາໄມຄວາມສະອາດຕົວເມືອງ ແລະ ອື່ນໆ.
6. ຕ້ອງຄຸ້ມຄອງບັນຫາຄວັນ, ແສງ, ສີ, ສຽງ ແລະ ກິ່ນ ໃຫ້ຢູ່ໃນສະພາບທີ່ດີ ບໍ່ສ້າງສິ່ງກະທົບຕໍ່ສັງຄົມ, ຫຼີກເວັ້ນການສ້າງຜົນກະທົບຕໍ່ເວລາເຮັດວຽກ, ເວລາພັກຜ່ອນ, ຕໍ່ການສັນຈອນ, ຮັກສາລະບົບນ້ຳໃຊ້, ນ້ຳເປື້ອນ ແລະ ນ້ຳວິດຖ່າຍ ບໍ່ໃຫ້ອັ່ງຄ້າງ ແລະ ປ່ອຍຊະຊາຍ ສ້າງຄວາມເປິເປື້ອນ ສິ່ງກິ່ນເໝັນ ໃຫ້ຄົນອ້ອມຂ້າງ ກໍ່ຄືຢູ່ໃນສັງຄົມ.

**ມາດຕາ 47 (ປັບປຸງ) ການກວດກາວຽກງານຄຸ້ມຄອງຕົວເມືອງ.**

ຄະນະກຳມະການກວດກາວຽກງານຄຸ້ມຄອງຕົວເມືອງປະກອບດ້ວຍ:

1. ອົງການກວດກາພາຍໃນ ແມ່ນການກວດກາຂອງຄະນະຮັບຜິດຊອບຄຸ້ມຄອງຕົວເມືອງຫ້ວຍຊາຍ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 28 ຂອງຂໍ້ຕົກລົງສະບັບນີ້.

2. ອົງການກວດກາພາຍນອກ ແມ່ນສະພາປະຊາຊົນແຂວງ, ພະແນກກວດກາລັດແຂວງ, ອົງການແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນແຂວງ ແລະ ຂອງເມືອງ.

**ມາດຕາ 48 ເນື້ອໃນຂອງການກວດກາ.**

ການກວດກາ ວຽກງານຄຸ້ມຄອງຕົວເມືອງ ມີຄືດັ່ງນີ້:

1. ການປະຕິບັດ ນະໂຍບາຍ, ກົດໝາຍ, ລະບຽບການ ແລະ ຂໍ້ຕົກລົງ ວ່າດ້ວຍການຄຸ້ມຄອງ ແລະ ພັດທະນາຕົວເມືອງຫ້ວຍຊາຍ.
2. ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຄະນະຮັບຜິດຊອບຄຸ້ມຄອງຕົວເມືອງ.
3. ຄວາມຮັບຜິດຊອບ, ພຶດຕິກຳ ແລະ ແບບແຜນວິທີເຮັດວຽກຂອງພະນັກງານຄຸ້ມຄອງຕົວເມືອງ.

**ມາດຕາ 49 ຮູບການການກວດກາ.**

ຮູບການກວດກາວຽກງານຄຸ້ມຄອງຕົວເມືອງ ມີດັ່ງນີ້:

1. ການກວດກາ ຕາມປົກກະຕິ.
2. ການກວດກາ ໂດຍມີການແຈ້ງການໃຫ້ຮູ້ລ່ວງໜ້າ.
3. ການກວດກາ ແບບກະທັນຫັນ.

**ມາດຕາ 50 (ປັບປຸງ) ມາດຕະການ ການຈັດຕັ້ງປະຕິບັດ ການຄຸ້ມຄອງຕົວເມືອງ.**

1. ຄະນະຮັບຜິດຊອບການຄຸ້ມຄອງຕົວເມືອງ ເປັນເຈົ້າການໃນການຈັດຕັ້ງປະຕິບັດ ແລະ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງຂັ້ນແຂວງ, ຂັ້ນເມືອງ ແລະ ຂັ້ນບ້ານ ໂດຍການລົງເຜີຍແຜ່ຂໍ້ຕົກລົງສະບັບນີ້ຢ່າງທົ່ວເຖິງທຸກບ້ານພາຍໃນຕົວເມືອງ ເພື່ອເຮັດໃຫ້ທຸກຊັ້ນຄົນຮັບຮູ້ ແລະ ເຂົ້າໃຈຕໍ່ແນວທາງນະໂຍບາຍຂອງພັກ-ລັດ ກໍ່ຄືຂໍ້ຕົກລົງສະບັບນີ້ຢ່າງເລິກເຊິ່ງ.
2. ພະແນກການຂອງແຂວງ, ຫ້ອງການຂອງເມືອງຫ້ວຍຊາຍ ຕ້ອງເປັນເຈົ້າການເຂົ້າຮ່ວມໃນການຈັດຕັ້ງປະຕິບັດ ແກ້ໄຂບັນຫາຕ່າງໆ ທີ່ພົວພັນເຖິງວຽກງານການຄຸ້ມຄອງຕົວເມືອງ ໃຫ້ໄດ້ຮັບຜົນດີ.
3. ພະແນກການເງິນແຂວງ ແຕ່ງຕັ້ງຄະນະກວດກາ ລົງກວດກາທາງດ້ານການເງິນຂອງອົງການພັດທະນາ ແລະ ບໍລິຫານຕົວເມືອງ ເພື່ອຊ່ວຍກວດກາ ແລະ ຢັ້ງຢືນຄວາມຖືກຕ້ອງທາງດ້ານບັນຊີລາຍຮັບ ແລະ ລາຍຈ່າຍ ຢ່າງນ້ອຍ ປີລະຄັ້ງ ເພື່ອລາຍງານຂັ້ນເທິງຊາບ.
4. ອົງການພັດທະນາ ແລະ ບໍລິຫານຕົວເມືອງ ຕ້ອງແຕ່ງຕັ້ງຄະນະຮັບຜິດຊອບຂັ້ນບ້ານຈຳນວນ 3 ຫາ 5 ທ່ານ ເພື່ອນຳພາຄຸ້ມຄອງ, ຕິດຕາມ, ກວດກາ ແລະ ອຳນວຍຄວາມສະດວກ ໃນການຈັດຕັ້ງປະຕິບັດຂໍ້ຕົກລົງ ສະບັບນີ້ ໃຫ້ປະກົດຜົນເປັນຈິງ.
5. ຂັ້ນບ້ານຕ້ອງ ໄດ້ຈັດຕັ້ງໃຫ້ມີຄະນະກວດກາປັບໄໝຂອງບ້ານ ເພື່ອຈັດຕັ້ງປະຕິບັດ ຢູ່ໃນຂອບເຂດບ້ານຂອງຕົນ ໂດຍແມ່ນເຈົ້າເມືອງເປັນຜູ້ແຕ່ງຕັ້ງຕາມຄວາມເໝາະສົມ.
6. ບັນດາຄອບຄົວ, ພົນລະເມືອງທຸກຄົນ ທີ່ຂຶ້ນກັບຕົວເມືອງຫ້ວຍຊາຍ ພ້ອມກັນເປັນເຈົ້າການໃນການຈັດຕັ້ງປະຕິບັດ ຂໍ້ຕົກລົງ ວ່າດ້ວຍ ການຄຸ້ມຄອງ ແລະ ພັດທະນາຕົວເມືອງ ສະບັບນີ້ຢ່າງເຂັ້ມງວດ.
7. ຄະນະຮັບຜິດຊອບຂັ້ນບ້ານ ຕ້ອງລາຍງານການເຄື່ອນໄຫວ ວຽກງານຄຸ້ມຄອງບ້ານຂອງຕົນ ຕາມຂໍ້ຕົກລົງສະບັບນີ້ ປະຈຳເດືອນ, ເດືອນ, 3 ເດືອນ, 6 ເດືອນ, 9 ເດືອນ ແລະ ໝົດປີ ໃຫ້ອົງການພັດທະນາ ແລະ ບໍລິຫານຕົວເມືອງ ເພື່ອລາຍງານໃຫ້ຂັ້ນເທິງ.

## ໝວດທີ 7
## ທຶນພັດທະນາຕົວເມືອງຫ້ວຍຊາຍ

**ມາດຕາ 51 ( ປັບປຸງ ) ທຶນພັດທະນາຕົວເມືອງຫ້ວຍຊາຍ.**

ລັດສົ່ງເສີມໃຫ້ທຸກພາກສ່ວນໃນສັງຄົມ ປະກອບສ່ວນທຶນຮອນ ເຂົ້າໃນການຄຸ້ມຄອງ ແລະ ພັດທະນາຕົວເມືອງຫ້ວຍຊາຍ ເພື່ອແກ້ໄຂຄວາມບໍ່ເປັນລະບຽບຮຽບຮ້ອຍ ໃນຕົວເມືອງຫ້ວຍຊາຍ ເປັນຕົ້ນ: ການປ້ອງກັນ, ແກ້ໄຂ ແລະ ບູລະນະຟື້ນຟູສິ່ງແວດລ້ອມໃນຕົວເມືອງ, ການສ້ອມແປງພື້ນຖານໂຄງລ່າງ, ການຕັດຕອນຕົ້ນໄມ້, ອະນາໄມຖະໜົນຫົນທາງ, ການບຳບັດນ້ຳເສຍ, ການເກັບມ້ຽນ ແລະ ກຳຈັດຂີ້ເຫຍື້ອ ເຮັດໃຫ້ຕົວເມືອງ ມີຄວາມເປັນລະບຽບຮຽບຮ້ອຍ, ສະອາດ, ສວຍງາມ.

**ມາດຕາ 52 (ປັບປຸງ) ແຫຼ່ງທຶນພັດທະນາຕົວເມືອງຫ້ວຍຊາຍ.**

ທຶນພັດທະນາຕົວເມືອງຫ້ວຍຊາຍ ໄດ້ມາຈາກແຫຼ່ງທຶນຕ່າງໆດັ່ງນີ້:

1 ງົບປະມານຂອງລັດ.

2 ທຶນຊ່ວຍເຫຼືອລ້າ-ກູ້ຢືມ ຈາກອົງການຈັດຕັ້ງສາກົນ.

3 ທຶນປະກອບສ່ວນຂອງທຸກພາກສ່ວນໃນສັງຄົມ.

4 ຄ່າທຳນຽມ ແລະ ຄ່າປັບໄໝຈາກກິດຈະການຕ່າງໆ.

**ມາດຕາ 53 (ປັບປຸງ) ການຄຸ້ມຄອງແຫຼ່ງທຶນ**

ການຄຸ້ມຄອງແຫຼ່ງທຶນ ຕ້ອງຈັດຕັ້ງປະຕິບັດດັ່ງນີ້:

1. ແຕ່ງຕັ້ງຜູ້ຮັບຜິດຊອບຄຸ້ມຄອງແຫຼ່ງທຶນ.
2. ສ້າງແຜນການນຳໃຊ້ທຶນ.
3. ສະຫຼຸບລາຍງານການນຳໃຊ້ທຶນ.

## ໝວດທີ 8
## ການເກັບລາຍຮັບ ແລະ ການນຳໃຊ້ທຶນ

**ມາດຕາ 54 (ໃໝ່) ການເກັບລາຍຮັບ.**

ອະນຸຍາດໃຫ້ອົງການພັດທະນາ ແລະ ບໍລິຫານຕົວເມືອງ ເກັບຄ່າພັນທະຕໍ່ການພັດທະນາຕົວເມືອງ ດ້ວຍການຈັດຜ່ານລະບົບບັນຊີລວມສູນຢູ່ໃນຄັງເງິນແຫ່ງຊາດປະຈຳແຂວງບໍ່ແກ້ວ ເຊິ່ງກຳນົດພື້ນຖານ ແລະ ການເກັບແຕ່ລະລາຍການ ຕາມຂໍ້ຕົກລົງສະບັບນີ້.

**ມາດຕາ 55 (ໃໝ່) ອັດຕາການເກັບທຶນພັດທະນາຕົວເມືອງ ເພື່ອໃຊ້ຈ່າຍເຂົ້າໃນການສ້ອມແປງໄຟຟ້າເຍືອງທາງ, ກະແສໄຟຟ້າສາທາລະນະ, ການທຳຄວາມສະອາດຕາມເສັ້ນທາງ, ຮ່ອງລະບາຍນ້ຳ ແລະ ຄວາມເປັນລະບຽບຮຽບຮ້ອຍໃນຕົວເມືອງຫ້ວຍຊາຍ.**

| ລ/ດ | ລາຍການ | ອັດຕາການເກັບເງິນພາກສ່ວນລະ | ໝາຍເຫດ |
|---|---|---|---|
| 1 | - ຫຼັງຄາເຮືອນ ຕິດກັບທາງທີ່ມີໄຟເຍືອງທາງ<br>- ຫຼັງຄາເຮືອນທີ່ບໍ່ມີໄຟເຍືອງທາງ | 5.000 ກີບ ຕໍ່ເດືອນ<br>3.000 ກີບ ຕໍ່ເດືອນ | |
| 2 | • ປະເພດທຸລະກິດການຜະລິດ<br>- ຂະໜາດນ້ອຍ<br>- ຂະໜາດກາງ<br>- ຂະໜາດໃຫຍ່ | 10.000 ກີບ ຕໍ່ເດືອນ<br>15.000 ກີບ ຕໍ່ເດືອນ<br>30.000 ກີບ ຕໍ່ເດືອນ | |

| | | | |
|---|---|---|---|
| 3 | • ຮ້ານອາຫານ<br>- ຂະໜາດນ້ອຍ<br>- ຂະໜາດກາງ<br>- ຂະໜາດໃຫຍ່ | <br>20.000 ກີບ ຕໍ່ເດືອນ<br>30.000 ກີບ ຕໍ່ເດືອນ<br>50.000 ກີບ ຕໍ່ເດືອນ | |
| 4 | • ບໍລິສັດ, ຫ້າງ, ຮ້ານ, ລັດວິສາຫະກິດ, ທະນາຄານທຸກສາຂາ | 50.000 ກີບ ຕໍ່ເດືອນ | |
| 5 | • ໂຮງແຮມ<br>• ເຮືອນພັກຂະໜາດ 5-10 ຫ້ອງ<br>• ເຮືອນພັກຂະໜາດ 11-15 ຫ້ອງ<br>• ເຮືອນພັກຂະໜາດ 16-19 ຫ້ອງ | 100.000 ກີບ ຕໍ່ເດືອນ<br>30.000 ກີບ ຕໍ່ເດືອນ<br>50.000 ກີບ ຕໍ່ເດືອນ<br>60.000 ກີບ ຕໍ່ເດືອນ | |
| 6 | • ສຳນັກງານ-ອົງການອ້ອມຂ້າງແຂວງ<br>• ສຳນັກງານ-ອົງການອ້ອມຂ້າງເມືອງ<br>• ໂຮງໝໍແຂວງ-ໂຮງໝໍທະຫານ, ຄຣີນິກ<br>• ໂຮງຮຽນ | 50.000 ກີບ ຕໍ່ເດືອນ<br>20.000 ກີບ ຕໍ່ເດືອນ<br>50.000 ກີບ ຕໍ່ເດືອນ<br>30.000 ກີບ ຕໍ່ເດືອນ | |

**ມາດຕາ 56 (ໃໝ່) ການອອກໃບອະນຸຍາດ ການຕິດຕັ້ງປ້າຍໂຄສະນາປະເພດຕ່າງໆ .**

- ຄ່າບໍລິການອອກໃບອະນຸຍາດ ການຕິດຕັ້ງປ້າຍໂຄສະນາຕ່າງໆ: ເຮັດດ້ວຍໄມ້, ໂລຫະ, ຟິໂບຣຊີມັງ, ແຜ່ນພາດສະຕິກແຂງ ແລະ ອື່ນໆ.
- ຄ່າບໍລິການອອກໃບອະນຸຍາດ ການຕິດຕັ້ງປ້າຍໂຄສະນາຕ່າງໆ ຊະນິດອ່ອນ: ເຮັດດ້ວຍແຜ່ນແພ, ຜ້າ,ຢາງພາສະຕິກ.
- ສຳລັບການອະນຸຍາດຕິດຕັ້ງປ້າຍ ບໍ່ກາຍ 7 ວັນ.

**ມາດຕາ 57 (ໃໝ່) ຄ່າບໍລິການນຳໃຊ້ທີ່ດິນເຂດສະຫງວນຂອງລັດ ( ໃນຕົວເມືອງຫ້ວຍຊາຍ ) ໂດຍບໍ່ຊ້ຳຊ້ອນ ກັບພາກສ່ວນອື່ນ.**

**1. ຄ່າບໍລິການນຳໃຊ້ທີ່ດິນຂອງລັດ ເພື່ອເຮັດກິດຈະກຳສ້າງລາຍໄດ້.**

- ຄ່າບໍລິການນຳໃຊ້ທີ່ດິນສາທາລະນະທີ່ມີການພັດທະນາໃນໄລຍະສັ້ນ 1.000 ກີບ/ 1ມ$^2$/ເດືອນ
- ຄ່າບໍລິການນຳໃຊ້ທີ່ດິນສາທາລະນະທີ່ມີການພັດທະນາໃນໄລຍະຍາວ 10.000 ກີບ/1ມ$^2$/ປີ
- ຄ່າບໍລິການນຳໃຊ້ທີ່ດິນສາທາລະນະທີ່ບໍ່ທັນພັດທະນາໃນໄລຍະສັ້ນ 500 ກີບ/ 1ມ$^2$/ເດືອນ.
- ຄ່າບໍລິການນຳໃຊ້ທີ່ດິນສາທາລະນະທີ່ບໍ່ທັນພັດທະນາໃນໄລຍະຍາວ 5.000 ກີບ/ 1ມ$^2$/ປີ.
- ຄ່າບໍລິການນຳໃຊ້ທີ່ດິນສາທາລະນະເພື່ອຈັດງານຕ່າງໆ ບໍ່ເກີນ 1 ອາທິດ 1.000 ກີບ/ 1ມ$^2$/ມື້.

**2. ຄ່າບໍລິການນຳໃຊ້ທີ່ດິນຂອງລັດ ເພື່ອຕິດຕັ້ງປ້າຍໂຄສະນາ.**

- ຄ່າບໍລິການນຳໃຊ້ທີ່ດິນຂອງລັດ ສຳລັບຕິດຕັ້ງປ້າຍ ທີ່ບໍ່ໃຊ້ແສງສະຫວ່າງ 100.000 ກີບ / 1ມ$^2$/ປີ.
- ຄ່າບໍລິການນຳໃຊ້ທີ່ດິນຂອງລັດ ສຳລັບຕິດຕັ້ງປ້າຍ ທີ່ໃຊ້ແສງສະຫວ່າງ 200.000 ກີບ/ 1ມ$^2$/ປີ.

**ມາດຕາ 58 (ໃໝ່) ການນຳໃຊ້ທຶນ.**

ອົງການພັດທະນາ ແລະ ບໍລິຫານຕົວເມືອງ ແຂວງບໍ່ແກ້ວ ນຳໃຊ້ທຶນຈາກການເກັບ ໃນມາດຕາ 55,56,57 ຂ້າງເທິງນີ້, ນຳໃຊ້ໃຫ້ຖືກຕ້ອງຕາມຂໍ້ຕົກລົງເລກທີ 1069/ຈຂ.ບກ ເຊິ່ງໄດ້ແບ່ງອອກເປັນ 2 ສ່ວນຄື: ສ່ວນແບ່ງ 90% ນຳໃຊ້ເຂົ້າໃນການກໍ່ສ້າງ, ສ້ອມແປງໄຟເຍືອງທາງ, ຊຳລະຄ່າກະແສໄຟຟ້າ

ສາທາລະນະ, ຄ່ານໍ້າປະປາສວນສາທາລະນະ, ອະນາໄມຖະໜົນຫົນທາງ, ຮ່ອງລະບາຍນໍ້າ, ຕັດແຕ່ງຕົ້ນໄມ້ແຄມທາງ ແລະ ຄວາມເປັນລະບຽບຮຽບຮ້ອຍໃນຕົວເມືອງ, ສ່ວນແບ່ງ 10% ມອບເຂົ້າເປັນກອງທຶນພັດທະນາຂອງບ້ານ ໂດຍມອບໃຫ້ບ້ານເປັນຜູ້ເກັບໃນແຕ່ລະເດືອນ.

## ໝວດທີ 9
## ຂໍ້ຫ້າມການຄຸ້ມຄອງຕົວເມືອງຫ້ວຍຊາຍ

**ມາດຕາ 59 (ປັບປຸງ) ຂໍ້ຫ້າມທົ່ວໄປ.**

ຫ້າມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທຸກພາກສ່ວນໃນຕົວເມືອງຫ້ວຍຊາຍ ມີພຶດຕິກຳດັ່ງນີ້:

1. ປ່ອຍສັດ ສະຊາຍຕາມຖະໜົນຫົນທາງ ແລະ ເຂດສາທາລະນະ ເຊິ່ງເປັນການລົບກວນຜູ້ອື່ນ ສ້າງຄວາມເປິເປື້ອນ ແລະ ກີດຂວາງການສັນຈອນພາໃຫ້ເກີດອຸປະຕິເຫດ.
2. ທັບມ້າງ, ທຳລາຍຊັບສົມບັດສາທາລະນະ ເຊັ່ນ: ໄຟຟ້າເຍືອງທາງ, ໄຟຟ້າສວນສາທາລະນະ, ປ້າຍຈາລະຈອນ, ຫຼັກລາຍ, ຫຼັກກັນຕົກ, ໂຖດອກໄມ້, ດອກໄມ້, ຕົ້ນໄມ້ທີ່ປູກໄວ້ ແລະ ອື່ນໆ.
3. ຈອດລົດຢູ່ເທິງຝາປິດຮ່ອງລະບາຍນໍ້າແຄມທາງ, ທາງຍ່າງ, ນຳໃຊ້ເສັ້ນທາງ, ແຄມທາງເປັນບ່ອນລ້າງລົດ, ເປັນບ່ອນຈອດລົດຖາວອນ, ລະເມີດກົດລະບຽບຈາລະຈອນ, ຂັບລົດໃນເວລາມຶນເມົາ, ດັດແປງສະພາບລົດໃຫ້ມີສຽງດັງເກີນປົກກະຕິ ແລະ ແລ່ນລົດໄວເກີນກຳນົດ.
4. ຈັດສັນດິນປຸກສ້າງຢູ່ເຂດປ່າສະຫງວນແຄມບ້ານ, ຍອດຫ້ວຍ, ແຫຼ່ງນໍ້າໃຫ້ບຸກຄົນຄຸ້ມຄອງໂດຍບໍ່ໄດ້ຮັບອະນຸຍາດ.
5. ປຸກສ້າງທຸກກໍລະນີຢູ່ໃນເຂດຂຽວ, ເຂດສະຫງວນ ແລະ ເຂດຫວງຫ້າມ ທີ່ແຂວງໄດ້ກຳນົດໄວ້.
6. ຂົນສົ່ງ ຫຼື ຕ່າງວັດສະດຸ, ອຸປະກອນມີນໍ້າໜັກເກີນ ທີ່ໄດ້ຮັບອະນຸຍາດຕາມລະບຽບ, ກົດໝາຍ ທີ່ໄດ້ກຳນົດຢູ່ແຕ່ລະເສັ້ນທາງທີ່ມີປ້າຍຫ້າມ ແລະ ຫ້າມລົດພ່ວງຂະໜາດໃຫຍ່ແລ່ນ ເຂົ້າມາຄົ່ງນຖ່າຍວັດສະດຸກໍ່ສ້າງຕາມເສັ້ນທາງ, ຂົວ ແລະ ຮ້ານຈຳໜ່າຍວັດສະດຸຢູ່ໃນຕົວເມືອງ.
7. ແລ່ນລົດບັນທຸກທີ່ຕີນລົດຕິດຂີ້ດິນ, ຂີ້ດິນເຂົ້າຢຽບເສັ້ນທາງປູຢາງຢູ່ພາຍໃນຕົວເມືອງຫ້ວຍຊາຍ ຢ່າງເດັດຂາດ.
8. ຖິ້ມຂີ້ເຫຍື້ອໃສ່ເສັ້ນທາງ ແລະ ຮ່ອງລະບາຍນໍ້າ ຢ່າງເດັດຂາດ.
9. ກາງເຕັນ, ຂາຍເຄື່ອງທຸກຊະນິດໃສ່ສະຖານທີ່ສາທາລະນະ ໂດຍບໍ່ໄດ້ຮັບອະນຸຍາດ ເຊັ່ນ: ແຄມຖະໜົນ, ເຂດທາງຍ່າງ, ໜ້າສຳນັກງານຫ້ອງການ ແລະ ສະຖານທີ່ອື່ນໆ ເພື່ອຈັດງານບຸນທາງດ້ານວັດທະນະທຳ, ຮີດຄອງປະເພນີ ແລະ ງານສັງຄົມຂອງບຸກຄົນ ຫຼື ການຈັດຕັ້ງ ເປັນບ່ອນມ່ວນຊື່ນ ຫຼື ທຳພິທີການຕ່າງໆ.
10. ຖອກກອງດິນ, ຫີນ, ແຮ່, ຊາຍ, ໄມ້, ເຫຼັກເສັ້ນ ແລະ ວັດສະດຸອື່ນໆ ໃສ່ສະຖານທີ່ສາທາລະນະ ເຊັ່ນ: ແຄມທາງ, ບ່າທາງ, ທາງຍ່າງ ແລະ ສະຖານທີ່ຫວງຫ້າມອື່ນໆ ທີ່ເປັນການກີດຂວາງການສັນຈອນ;
11. ປຸກສ້າງທຸກກິດຈະການຢູ່ເຂດຂຽວ, ເຂດສະຫງວນ, ເຂດຫວງຫ້າມ ແລະ ຫ້ວຍຮ່ອງທຳມະຊາດ, ຂຸດດິນ ແລະ ຖົມດິນແຄມທາງ, ບ່າທາງຢູ່ໃນຂອບເຂດສະຫງວນໂດຍບໍ່ໄດ້ຮັບອະນຸຍາດ.
12. ຕັ້ງຮ້ານບັນເທີງ, ຮ້ານຄາລາໂອເກະ ຢູ່ໃກ້ກັບສະຖານທີ່ໂຮງຮຽນ, ໂຮງໝໍ ແລະ ວັດ ຢ່າງເດັດຂາດ.
13. ຊຸມແຊວ, ຈັດງານສັງສັນ ແລະ ງານລ້ຽງອື່ນໆ ຢູ່ພາຍໃນຕົວເມືອງ ບໍ່ໃຫ້ເກີນ 23 ໂມງ:30 ນາທີ ຫຼື ບໍ່ໃຫ້ເກີນເວລາ ທີ່ທາງການໄດ້ແຈ້ງອອກເປັນແຕ່ລະໄລຍະ.
14. ນຳໃຊ້ຢາຂ້າຫຍ້າ, ຢາຂ້າແມງໄມ້ຢູ່ຕາມສວນ, ເດີ່ນບ້ານ, ສະຖານທີ່ສຳນັກງານ-ອົງການ, ໂຮງຮຽນ-ໂຮງໝໍ ແລະ ຢູ່ແຄມທາງ ທີ່ເປັນຜົນກະທົບຕໍ່ສຸຂະພາບຂອງຄົນ, ສັດ ແລະ ສິ່ງແວດລ້ອມ.

**ມາດຕາ 60 (ປັບປຸງ) ຂໍ້ຫ້າມສຳລັບພະນັກງານ**

ຫ້າມພະນັກງານຄຸ້ມຄອງຕົວເມືອງ ມີພຶດຕິກຳດັ່ງນີ້:

1. ດຳເນີນທຸລະກິດໂດຍການເປັນເຈົ້າຂອງ, ເປັນອຳນວຍການ, ເປັນຂາຮຸ້ນ, ເປັນຜູ້ຈັດການຂອງຫົວໜ່ວຍທຸລະກິດ ທີ່ຕິດພັນກັບໜ້າທີ່ຄວາມຮັບຜິດຊອບຂອງຕົນ ເວັ້ນເສຍແຕ່ໄດ້ຮັບອະນຸຍາດ.
2. ສວຍໃຊ້ໜ້າທີ່, ຕຳແໜ່ງຂອງຕົນ ເພື່ອຜົນປະໂຫຍດສ່ວນຕົວ.
3. ພະນັກງານເກັບລາຍຮັບ ນຳໃຊ້ໃບບິນເກັບເງິນ ທີ່ບໍ່ເປັນທາງການ, ໃບບິນບໍ່ມີກາຈ້ຳ, ປອມແປງໃບບິນ ແລະ ຫ້າມນຳໃຊ້ເງິນ ທີ່ເກັບໄດ້ ໄປໝູນໃຊ້ວຽກສ່ວນຕົວຢ່າງເດັດຂາດ.
4. ພະນັກງານວິຊາການນາບຂູ່ ເພື່ອຜົນປະໂຫຍດສ່ວນຕົວໃນເວລາລົງປະຕິບັດໜ້າທີ່ວຽກງານ.
5. ພະນັກງານວິຊາການ ເຄື່ອນໄຫວໜ້າທີ່ ເກີນຂອບເຂດ ເພື່ອຫວັງຜົນປະໂຫຍດສ່ວນຕົວ.
6. ເກັບເງິນເກີນລາຄາອະນຸຍາດ, ລັກເກັບເງິນເອົາເອງ ໂດຍບໍ່ມອບເຂົ້າລັດ ແລະ ໃຊ້ຈ່າຍເງິນທີ່ໄດ້ຈາກການເກັບ ແລະ ການປັບໄໝທຸກກໍລະນີ ໂດຍບໍ່ໄດ້ຮັບອະນຸຍາດ.

## ໝວດທີ 10
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 61 ນະໂຍບາຍຕໍ່ຜູ້ມີຜົນງານ.**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດ ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນໆ ຕາມລະບຽບການ.

**ມາດຕາ 62 (ປັບປຸງ) ມາດຕະການຕໍ່ຜູ້ລະເມີດ.**

1. ບຸກຄົນໃດ ຫາກທຳລາຍ, ສ້າງຄວາມເສຍຫາຍ ແກ່ຊັບສິນບັດສ່ວນລວມ ເຊັ່ນ: ໄຟຟ້າເຍືອງທາງ, ໄຟສວນສາທາລະນະ, ປ້າຍສັນຈອນ, ຫຼັກລາຍ, ໂຖດອກໄມ້, ຕົ້ນໄມ້, ດອກໄມ້ທີ່ປູກໄວ້ ແລະ ອື່ນໆ ຕ້ອງຮັບຜິດຊອບຄ່າໃຊ້ຈ່າຍທັງໝົດ ທີ່ເກີດຂຶ້ນ ແລະ ຈະຖືກດຳເນີນຄະດີຕາມ ລະບຽບ ແລະ ກົດໝາຍ.
2. ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດ ຫາກໄດ້ລ້ຽງສັດປະເພດຕ່າງໆຢູ່ໃນຕົວເມືອງຫ້ວຍຊາຍ ໂດຍບໍ່ມີການຄຸ້ມຄອງ, ປ່ອຍສະຊາຍ ຕາມເສັ້ນທາງ ແລະ ເຂດສາທາລະນະ, ສ້າງຄວາມເປິເປື້ອນ, ສິ່ງກິ່ນເໝັນສ້າງຜົນກະທົບຕໍ່ຜູ້ອື່ນ ແລະ ສິ່ງແວດລ້ອມ, ກີດຂວາງການສັນຈອນ ພາໃຫ້ເກີດອຸປະຕິເຫດ ຕ້ອງໄດ້ຮັບຜິດຊອບຕໍ່ເຫດການທີ່ເກີດຂຶ້ນ ຫຼື ຖືກດຳເນີນຄະດີຕາມກົດໝາຍ ແລະ ຈະຖືກປະຕິບັດ ຕາມມາດຕະການ ຄື:

- ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດ ຫາກລ້ຽງສັດປະເພດ: ໝູ, ແບ້, ໝາ ຢູ່ໃນຕົວເມືອງຫ້ວຍຊາຍ ໂດຍບໍ່ມີການຄຸ້ມຄອງ, ປ່ອຍສະຊາຍ ສ້າງຄວາມເປິເປື້ອນ ແລະ ກີດຂວາງການສັນຈອນ, ຖ້າຫາກຄະນະຮັບຜິດຊອບຄຸ້ມຄອງຕົວເມືອງຫ້ວຍຊາຍ ຈັບໄດ້ຈະຖືກປັບໃໝ 1.200.000 ກີບ/ຄັ້ງ ແລະ ເຮັດບົດບັນທຶກ. ຖ້າຫາກຍັງພົບເຫັນຄັ້ງທີ 2 ແມ່ນຈະຍຶດເຂົ້າເປັນຂອງລັດ.
- ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດ ຫາກໄດ້ລ້ຽງສັດປະເພດ: ງົວ, ຄວາຍ, ມ້າ ຢູ່ໃນຕົວເມືອງຫ້ວຍຊາຍ ໂດຍບໍ່ມີການຄຸ້ມຄອງ, ປ່ອຍສະຊາຍ ສ້າງຄວາມເປິເປື້ອນ ແລະ ກີດຂວາງການສັນຈອນ, ຖ້າຫາກຄະນະຮັບຜິດຊອບຄຸ້ມຄອງຕົວເມືອງຫ້ວຍຊາຍ ຈັບໄດ້ຈະຖືກປັບໄໝ 1.500.000 ກີບ/ຄັ້ງ, ພ້ອມເຮັດບົດບັນທຶກ. ຖ້າຫາກຍັງພົບເຫັນຄັ້ງທີ 2 ແມ່ນຈະຍຶດເຂົ້າເປັນຂອງລັດ.

3. ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດ ຫາກໄດ້ຈອດລົດຢູ່ເທິງຝາປິດຮ່ອງລະບາຍນ້ຳແຄມທາງ, ທາງຍ່າງໃຊ້ແຄມທາງເປັນບ່ອນລ້າງລົດ, ເປັນບ່ອນຈອດລົດຖາວອນ ຈະຖືກປະຕິບັດ ມາດຕະການດັ່ງນີ້:

- ຄັ້ງທີ 1 ປັບໄໝ 150.000 ກີບ, ເຮັດບົດບັນທຶກກ່າວເຕືອນ.

- ຄັ້ງທີ 2 ປັບໄໝ 250.000 ກີບ, ພ້ອມທັງເຮັດບົດບັນທຶກ ແລະ ອະນາໄມໃຫ້ສະອາດ, ຖ້າຍັງພົບເຫັນຈະຖືກປັບໄໝ 500.000 ກີບ, ພ້ອມທັງຍຶດໃບຂັບຂີ່ລົດໄວ້ ແລະ ດຳເນີນຄະດີ ຕາມລະບຽບ, ກົດໝາຍ.

4. ບຸກຄົນ,ນິຕິບຸກຄົນ ຫຼື ການຈັດຕັ້ງໃດຫາກໄດ້ປຸກສ້າງກິດຈະການຕ່າງໆ ຢູ່ໃນເຂດຂຽວ, ເຂດສະຫງວນ ແລະ ເຂດຫວງຫ້າມ ໂດຍບໍ່ໄດ້ຮັບອະນຸຍາດຈາກພາກສ່ວນທີ່ກ່ຽວຂ້ອງ ຕ້ອງຮື້ຖອນສິ່ງປຸກສ້າງ ອອກຈາກເຂດດັ່ງກ່າວ ພ້ອມທັງໃຊ້ແທນຄ່າເສຍຫາຍ ທີ່ເກີດຂຶ້ນ ຫຼື ຖືກດຳເນີນຄະດີ ຕາມກົດໝາຍ.

5. ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດ ທີ່ເອົາຂີ້ເຫຍື້ອໄປຖິ້ມດ້ວຍຕົນເອງ, ເຮັດຂີ້ເຫຍື້ອຕົກເຮ່ຍໃສ່ເສັ້ນທາງ ຫຼື ໄປຖິ້ມໃສ່ຕາມແຄມທາງ ຈະຖືກປະຕິບັດ ມາດຕະການດັ່ງນີ້:

- ຄັ້ງທີ 1 ປັບໄໝ 150.000 ກີບ, ພ້ອມເຮັດບົດບັນທຶກ ແລະ ອະນາໄມໃຫ້ສະອາດ.
- ຄັ້ງທີ 2 ປັບໄໝ 250.000 ກີບ, ພ້ອມທັງເຮັດບົດບັນທຶກ ແລະ ອະນາໄມໃຫ້ສະອາດ, ຖ້າຍັງພົບເຫັນຈະຖືກປັບໄໝ 500.000 ກີບ, ພ້ອມອະນາໄມໃຫ້ສະອາດ ແລະ ປະຕິບັດ ຕາມລະບຽບ, ກົດໝາຍ.

6. ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດ ຫາກໄດ້ຖິ້ມຂີ້ເຫຍື້ອ ຢູ່ຕາມສະຖານທີ່ຕ່າງໆ ໃນຕົວເມືອງ ເຊັ່ນ: ເສັ້ນທາງ, ປ່າທາງ, ແຄມທາງ, ດິນເປົ່າຫວ່າງ, ຮ່ອງລະບາຍນ້ຳ, ນ້ຳຫ້ວຍ, ແມ່ນ້ຳຂອງ, ສະຖານທີ່ສາທາລະນະ,ສະຖານທີ່ບໍລິການຄ້າຂາຍ, ສະຖານທີ່ມີການຈັດງານຕ່າງໆ ຈະຖືກປະຕິບັດ ມາດຕະການດັ່ງນີ້:

- ຄັ້ງທີ 1 ເຮັດບົດບັນທຶກ, ປັບໄໝ 200.000 ກີບ ພ້ອມທັງອະນາໄມໃຫ້ສະອາດ.
- ຄັ້ງທີ 2 ປັບໄໝ 300.000 ກີບ ພ້ອມອະນາໄມຄືນໃຫ້ສະອາດ. ຖ້າຍັງພົບເຫັນຈະຖືກປັບໄໝ 500.000 ກີບ, ພ້ອມອະນາໄມໃຫ້ສະອາດ ແລະ ປະຕິບັດ ຕາມລະບຽບ,ກົດໝາຍ.

7. ບຸກຄົນ, ນິຕິບຸກຄົນໃດ ຫາກຖິ້ມຂີ້ເຫຍື້ອ ອອກຈາກຍານພາຫະນະໃນເວລາລົດແລ່ນ, ເຮືອແລ່ນ ແລະ ເວລາຈອດລົດ, ເຮືອຈອດ ໃສ່ຕາມເສັ້ນທາງ, ນ້ຳ ຈະຖືກປະຕິບັດ ມາດຕະການດັ່ງນີ້:

- ຄັ້ງທີ 1 ປັບໄໝ 150.000 ກີບ ພ້ອມອະນາໄມໃຫ້ສະອາດ.
- ຄັ້ງທີ 2 ປັບໄໝ 250.000 ກີບ, ພ້ອມທັງອະນາໄມໃຫ້ສະອາດ, ຍຶດໃບຂັບຂີ່ ແລະ ເອກະສານໄວ້ ແລະ ປະຕິບັດ ຕາມລະບຽບ, ກົດໝາຍ.

8. ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດ ຫາກໄດ້ຈູດເຜົາຂີ້ເຫຍື້ອ ຫຼື ສິ່ງເສດເຫຼືອຢູ່ໃນຕົວເມືອງ, ເຂດຊຸມຊົນ,ຢູ່ຕາມໂຮງຈັກ, ໂຮງງານ, ຕະຫຼາດ, ໂຮງຮຽນ, ໂຮງໝໍ, ບ້ານ ແລະ ສະຖານທີ່ອື່ນໆ ຈະຖືກປະຕິບັດ ມາດຕະການດັ່ງນີ້:

- ຄັ້ງທີ 1 ສຶກສາອົບຮົມ, ກ່າວເຕືອນ, ເຮັດບົດບັນທຶກ.
- ຄັ້ງທີ 2 ປັບໄໝ 250.000 ກີບ, ເຮັດບົດບັນທຶກ.
- ຄັ້ງທີ 3 ປັບໄໝ 500.000 ກີບ ຫຼື ຖືກດຳເນີນຄະດີ ຕາມກົດໝາຍ.

9. ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດ ຫາກປ່ອຍນ້ຳເປື້ອນ, ນ້ຳເສຍ, ນ້ຳອາຈົມ ໂດຍບໍ່ໄດ້ບຳບັດຂ້າເຊື້ອ ແລະ ດັບກິ່ນ ຈະຖືກປະຕິບັດມາດຕະການ ດັ່ງນີ້:

- ຄັ້ງທີ 1 ສຶກສາອົບຮົມ, ກ່າວເຕືອນ, ເຮັດບົດບັນທຶກ.
- ຄັ້ງທີ 2 ປັບໄໝ 500.000 ກີບ, ຖ້າດຳເນີນທຸລະກິດຈະຖືກຍຶດໃບທະບຽນດຳເນີນທຸລະກິດ, ປິດກິດຈະການຊົ່ວຄາວ.
- ຄັ້ງທີ 3 ປັບໄໝ 1.000.000 ກີບ, ປິດກິດຈະການຖາວອນ ຫຼື ຖືກດຳເນີນຄະດີຕາມກົດໝາຍ.

10. ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດ ຫາກໄດ້ໃຊ້ສານເຄມີຢາຂ້າຫຍ້າ, ຂ້າແມງໄມ້ຢູ່ໃນຕົວເມືອງ ຈະຖືກປະຕິບັດ ມາດຕະການ ຄືດັ່ງນີ້:

- ຄັ້ງທີ 1 ສຶກສາອົບຮົມ, ກ່າວເຕືອນ, ເຮັດບົດບັນທຶກ;
- ຄັ້ງທີ 2 ປັບໄໝ 500.000 ກີບ, ຜູ້ລະເມີດຕ້ອງຮັບຜິດຊອບຕໍ່ຜົນເສຍຫາຍທັງໝົດ.

- ຄັ້ງທີ 3 ປັບໃໝ 1.000.000 ກີບ, ຮັບຜິດຊອບຕໍ່ຜົນເສຍຫາຍ ຫຼື ຖືກດຳເນີນຄະດີຕາມກົດໝາຍ.

11. ໂຮງຈັກ, ໂຮງງານ, ຜູ້ປະກອບການໃດ ທີ່ດຳເນີນທຸລະກິດ: ການສ້ອມແປງພາຫະນະ, ຈອດໂລຫະ, ເຄາະຈອດ, ພົ່ນສີ, ສະຖານທີ່ບັນເທີງ, ຮ້ານອາຫານ ເຮັດໃຫ້ເກີດມີສຽງເນືອງນັນ, ກິ່ນຂີວເໝັນເກີນມາດຕະຖານທີ່ກຳນົດ ເຮັດໃຫ້ມີຜົນກະທົບຕໍ່ສຸຂະພາບຂອງຄົນ, ສັດ ແລະ ສິ່ງແວດລ້ອມ ຈະຖືກປະຕິບັດມາດຕະການດັ່ງນີ້:

- ຄັ້ງທີ 1 ສຶກສາອົບຮົມ, ກ່າວເຕືອນ, ເຮັດບົດບັນທຶກ;
- ຄັ້ງທີ 2 ປັບໃໝ 1.000.000 ກີບ, ຍ້າຍອອກໄປຕັ້ງບ່ອນໃໝ່ທີ່ມີຄວາມເໝາະສົມ, ຮັບຜິດຊອບຕໍ່ຜົນເສຍຫາຍທັງໝົດ ແລະ ປິດກິດຈະການຊົ່ວຄາວ;
- ຄັ້ງທີ 3 ປັບໃໝ 2.000.000 ກີບ, ປິດກິດຈະການຖາວອນ ແລະ ຮັບຜິດຊອບຕໍ່ຜົນເສຍທີ່ເກີດຂຶ້ນ.

12. ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດ ຫາກໄດ້ແລ່ນລົດບັນທຸກທີ່ຕິນລົດຕິດຂີ້ຕົມ, ຂີ້ດິນເຂົ້າຢຽບເສັ້ນທາງປູຢາງຢູ່ພາຍໃນຕົວເມືອງຫ້ວຍຊາຍ ຈະຖືກປະຕິບັດ ມາດຕະການ ຄືດັ່ງນີ້:

- ຄັ້ງທີ 1 ສຶກສາອົບຮົມ, ກ່າວເຕືອນ, ເຮັດບົດບັນທຶກ, ອະນາໄມໃຫ້ສະອາດ.
- ຄັ້ງທີ 2 ປັບໃໝ 50.000 ກີບ/ແມັດຍາວ/ຄັນ/ຄັ້ງ, ອະນາໄມໃຫ້ສະອາດ ແລະ ສ້າງບົດບັນທຶກໄວ້.
- ຄັ້ງທີ 3 ປັບໃໝ 100.000 ກີບ/ແມັດຍາວ/ຄັນ/ຄັ້ງ, ອະນາໄມໃຫ້ສະອາດ ຫຼື ລົງໂທດຕາມກົດໝາຍ.

13. ສຳນັກງານອົງການ, ບໍລິສັດ, ຫ້າງຮ້ານ, ເຮືອນຂອງບຸກຄົນ ທີ່ຕິດກັບເສັ້ນທາງຫຼວງ, ທາງຊອຍ ແລະ ມີຮ່ອງລະບາຍນ້ຳຜ່ານ, ຖ້າບໍ່ອະນາໄມ ໃນຂອບເຂດຄວາມຮັບຜິດຊອບ ຕອນດິນຂອງຕົນ ຈະຖືກປະຕິບັດມາດຕະການດັ່ງນີ້:

- ຄັ້ງທີ 1 ສຶກສາອົບຮົມ, ກ່າວເຕືອນ, ເຮັດບົດບັນທຶກໄວ້ເປັນຫຼັກຖານ ແລະ ອະນາໄມໃຫ້ສະອາດ;
- ຄັ້ງທີ 2 ປັບໃໝ 100.000 ກີບ, ເຮັດບົດບັນທຶກຮ່ວມກັບອົງການປົກຄອງບ້ານ, ອະນາໄມໃຫ້ສະອາດ;
- ຄັ້ງທີ 3 ປັບໃໝ 200.000 ກີບ, ເຮັດບົດບັນທຶກຮ່ວມກັບອົງການປົກຄອງບ້ານ, ອະນາໄມໃຫ້ສະອາດ ແລະ ອອກຂ່າວທາງສື່ມວນຊົນ.

14. ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດ ຫາກໄດ້ກາງເຕັ້ນ, ຂາຍເຄື່ອງໃສ່ສະຖານທີ່ສາທາລະນະ ເຊັ່ນ: ແຄມທາງ, ທາງຍ່າງ ແລະ ສະຖານທີ່ອື່ນໆ ເພື່ອຈັດງານຕ່າງໆ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປະຕິບັດມາດຕະການ ດັ່ງຕໍ່ໄປນີ້:

- ຄັ້ງທີ 1 ສຶກສາອົບຮົມ, ກ່າວເຕືອນໃຫ້ຢຸດເຊົາ ແລະ ເຮັດບົດບັນທຶກໄວ້ ເພື່ອເປັນຫຼັກຖານ.
- ຄັ້ງທີ 2 ປັບໃໝ 100.000 ກີບ ພ້ອມທັງຍຶດເອົາໂຕະຕັ່ງ ແລະ ເຄື່ອງທີ່ວາງຂາຍ ໄປໄວ້ຫ້ອງການຂອງເຈົ້າໜ້າທີ່ ແລ້ວຈຶ່ງຄ່ອຍໄປໄກ່ເກ່ຍຕາມທີ່ຫຼັງ.
- ຄັ້ງທີ 3 ປັບໃໝ 200.000 ກີບ ພ້ອມທັງຍຶດເອົາໂຕະ, ຕັ່ງ ແລະ ເຄື່ອງ ໄວ້ເປັນຂອງລັດ ພ້ອມທັງລົງຂ່າວສື່ມວນຊົນ.

15. ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດ ທີ່ມີຕອນດິນເປົ່າຫວ່າງ ຫຼື ສິ່ງກໍ່ສ້າງຢູ່ແຄມທາງ ຢູ່ໃນຕົວເມືອງຫ້ວຍຊາຍ ບໍ່ປົກປັກຮັກສາ, ບໍ່ອະນາໄມປະໃຫ້ເປິເປື້ອນ, ຮົກເຮື້ອ ຈະຖືກປະຕິບັດ ມາດຕະການດັ່ງນີ້:

- ຄັ້ງທີ 1 ສຶກສາອົບຮົມ, ກ່າວເຕືອນ, ເຮັດບົດບັນທຶກໄວ້ ເພື່ອເປັນຫຼັກຖານ.
- ຄັ້ງທີ 2 ປັບໃໝ 100.000 ກີບ ແລະ ເຮັດບົດບັນທຶກໄວ້ ເພື່ອເປັນຫຼັກຖານ.
- ຄັ້ງທີ 3 ປັບໃໝ 200.000 ກີບ, ເຮັດບົດບັນທຶກໄວ້ເພື່ອເປັນຫຼັກຖານ ແລະ ອອກຂ່າວທາງສື່ມວນຊົນ.

16. ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດ ຫາກໄດ້ຖອກກອງດິນ, ຫີນ, ແຮ່, ຊາຍ, ໄມ້, ເຫຼັກເສັ້ນ ແລະວັດສະດຸກໍ່ສ້າງ ໃສ່ສະຖານທີ່ສາທາລະນະ ເຊັ່ນ: ແຄມທາງ, ບ່າທາງ, ທາງຍ່າງ ແລະ ສະຖານທີ່ຫວງຫ້າມກີດຂວາງຜູ້ອື່ນ, ກີດຂວາງການສັນຈອນ ຈະຖືກປະຕິບັດ ມາດຕະການຄື:

- ຄັ້ງທີ 1 ສຶກສາອົບຮົມ, ກ່າວເຕືອນ ແລະໃຫ້ຂົນຍ້າຍອອກພາຍໃນ 1 ວັນ ຫຼື 24 ຊົ່ວໂມງ;
- ຄັ້ງທີ 2 ປັບໃໝ 150.000 ກີບ/ວັນ ແລະ ໃຫ້ຍົກຍ້າຍອອກພາຍໃນ 24 ຊົ່ວໂມງ;
- ຄັ້ງທີ 3 ປັບໃໝ 250.000 ກີບ/ວັນ ແລະ ໃຫ້ຍ້າຍອອກພາຍໃນ 24 ຊົ່ວໂມງ ພ້ອມທັງອອກຂ່າວທາງສື່ມວນຊົນ.

17. ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດ ທີ່ໄດ້ຮັບເໝົາກໍ່ສ້າງ ແລະ ສ້ອມແປງກິດຈະການໃດໜຶ່ງ ໂດຍບໍ່ມີໃບອະນຸຍາດປຸກສ້າງ ຈະຖືກປັບໃໝ 10% ຂອງມູນຄ່າການກໍ່ສ້າງທັງໝົດ, ກໍລະນີຜູ້ຮັບເໝົາກໍ່ສ້າງ ບໍ່ມີໃບອະນຸຍາດດຳເນີນທຸລະກິດກໍ່ສ້າງ ຫຼື ນຳໃຊ້ໃບອະນຸຍາດຂອງຜູ້ອື່ນ ຈະຖືກປັບໃໝ 15% ຂອງມູນຄ່າການກໍ່ສ້າງທັງໝົດ ທັງຍຶດໃບອະນຸຍາດດຳເນີນທຸລະກິດກໍ່ສ້າງ.

18. ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດ ຫາກໄດ້ຈົກດິນ, ຖົມດິນ ແລະ ຂົນຍ້າຍດິນ ໂດຍບໍ່ໄດ້ຮັບອະນຸຍາດ, ຂົນສິ່ງດິນ ເຮັດໃຫ້ດິນຕົກເຮ່ຍໃສ່ເສັ້ນທາງ, ເຮັດໃຫ້ເສັ້ນທາງເປ່ເພເສຍຫາຍ ແລະ ສ້າງສິ່ງເປິເປື້ອນໃສ່ເສັ້ນທາງ ຈະຖືກປັບໃໝແຕ່ 200.000 ກີບ ຫາ 300.000 ກີບ ພ້ອມທັງໃຫ້ອະນາໄມເສັ້ນທາງໃຫ້ມີຄວາມສະອາດ.

## ໝວດທີ 11
## ບົດບັນຍັດສຸດທ້າຍ

**ມາດຕາ 63 ການຈັດຕັ້ງປະຕິບັດ.**

- ຄະນະຮັບຜິດຊອບຄຸ້ມຄອງຕົວເມືອງ ເປັນເຈົ້າການໃນການຈັດຕັ້ງປະຕິບັດ ໂດຍປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງຂັ້ນແຂວງ, ຂັ້ນເມືອງ ແລະ ຂັ້ນບ້ານ ລົງເຜີຍແຜ່ ຂໍ້ຕົກລົງສະບັບນີ້ ຢ່າງທົ່ວເຖິງ ທຸກບ້ານພາຍໃນຕົວເມືອງ.
- ໃຫ້ແຕ່ງຕັ້ງຄະນະຮັບຜິດຊອບກວດກາຄຸ້ມຄອງຕົວເມືອງຂັ້ນແຂວງ, ຂັ້ນເມືອງ ເພື່ອຕິດຕາມ ແລະ ກວດກາປະເມີນຜົນ ແຕ່ລະກິດຈະການໃນແຕ່ລະໄລຍະ ເພື່ອນຳເອົາຜົນກວດກາ ແລະ ການປະເມີນຜົນ ເພື່ອລາຍງານໃຫ້ແຂວງ.

**ມາດຕາ 64 (ປັບປຸງ) ຜົນສັກສິດ.**

- ຂໍ້ຕົກລົງສະບັບນີ້ມີຜົນສັກສິດ ພາຍຫຼັງ 30 ວັນ. ນັບແຕ່ເຈົ້າແຂວງ ແຂວງບໍ່ແກ້ວ ໄດ້ລົງລາຍເຊັນປະກາດເປັນຕົ້ນໄປ.
- ຂໍ້ຕົກລົງສະບັບນີ້ ປ່ຽນແທນຂໍ້ຕົກລົງ ສະບັບເລກທີ 849/ຈຂ.ບກ, ລົງວັນທີ 22 ສິງຫາ 2017, ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ເຈົ້າແຂວງ ແຂວງບໍ່ແກ້ວ**

ແຂວງ ບໍ່ແກ້ວ
ເຈົ້າແຂວງ

ປອ ບົວຄົງ ນາມມະວົງ